ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຊີ້ນຳລວມ

ອຳນວຍຄວາມສະດວກທາງການຄ້າຂັ້ນສູນກາງ

ເລກທີ..002......./ຄອຄສ

ນະຄອນຫຼວງວຽງຈັນ, ວັນທີ.02...ກໍລະກົດ 2020

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງເອົານິຕິກຳ ແລະ ແຜນການສ້າງ, ປັບປຸງນິຕິກຳ ກ່ຽວກັບການອອກອະນຸຍາດ, ຢັ້ງຢືນ ນຳເຂົ້າ-ສົ່ງອອກ ແລະ ການເຄື່ອນຍ້າຍ ສິນຄ້າ (ເອກະສານຊ້ອນທ້າຍ 01) ຂອງຄຳສັ່ງ ວ່າດ້ວຍ ການອຳນວຍຄວາມສະດວກໃຫ້ແກ່ ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍ ສິນຄ້າ ຢູ່ ສປປ ລາວ ເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຊີ້ນຳລວມອຳນວຍຄວາມສະດວກທາງດ້ານການຄ້າ ເລກທີ 48/ນຍ, ລົງວັນທີ 26 ກໍລະກົດ 2018.
- ອີງຕາມ ຄຳສັ່ງ ວ່າດ້ວຍການອຳນວຍຄວາມສະດວກໃຫ້ແກ່ ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍ ສິນຄ້າ ຢູ່ ສປປ ລາວ ເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019.
- ອີງຕາມ ໜັງສືແຈ້ງຕອບ ຂອງຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບເອກະສານຊ້ອນທ້າຍ 01 ຂອງຄຳສັ່ງ ເລກທີ 12/ນຍ.

**ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ,**

**ຮອງຫົວໜ້າ ຄະນະກຳມະການຊີ້ນຳລວມອຳນວຍຄວາມສະດວກທາງດ້ານການຄ້າ ຂັ້ນສູນກາງ (ຄອຄສ) ອອກຂໍ້ຕົກລົງ:**

### ມາດຕາ 1. ການຮັບຮອງ

ຮັບຮອງເອົາເອກະສານຊ້ອນທ້າຍ 01 ຂອງຄຳສັ່ງ ວ່າດ້ວຍການອຳນວຍຄວາມສະດວກໃຫ້ແກ່ ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍ ສິນຄ້າ ຢູ່ ສປປ ລາວ ເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019.

### ມາດຕາ 2. ການຈັດຕັ້ງປະຕິບັດ

ໃຫ້ບັນດາຂະແໜງການ ລາຍງານຄວາມຄືບໜ້າຂອງການສ້າງ ແລະ ປັບປຸງ ບັນດານິຕິກຳທີ່ກຳນົດຢູ່ໃນເອກະສານຊ້ອນທ້າຍ 01 ມາຍັງກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ໃນນາມກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ເປັນແຕ່ລະໄລຍະ ເພື່ອສັງລວມລາຍງານຕໍ່ ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ຂັ້ນສູນກາງ ພິຈາລະນາ ແລະ ໃຫ້ທິດຊີ້ນຳ.

ໃຫ້ບັນດາຂະແໜງການທີ່ຢູ່ໃນເອກະສານຊ້ອນທ້າຍ 01 ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

### ມາດຕາ 3. ຜົນບັງຄັບໃຊ້

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ

ຮອງຫົວໜ້າ ຄອຄສ, ຜູ້ປະຈຳການ

ຫົວໜ້າ

ນ ເຂັມມະນີ ພົນເສນາ

ເອກະສານຊ້ອນທ້າຍ 1: ນິຕິກຳ ແລະ ແຜນການສ້າງ, ປັບປຸງນິຕິກຳ ທີ່ກ່ຽວຂ້ອງກັບການອອກອະນຸຍາດ, ຢັ້ງຢືນ ການນຳເຂົ້າ-ສົ່ງອອກ ແລະ ການເຄື່ອນຍ້າຍ ສິນຄ້າ

| ລ/ດ | ມາດຕະການ | ຂະແໜງການ | ນິຕິກຳ | ການປັບປຸງ | ໝາຍເຫດ |
|---|---|---|---|---|---|
| 1 | **ການອອກໃບອະນຸຍາດສົ່ງອອກ - ຜະລິດຕະພັນຖ່ານຂາວ**<br><br>ການສົ່ງອອກຜະລິດຕະພັນຖ່ານຂາວ ຕ້ອງໄດ້ຮັບການອອກອະນຸຍາດ ຈາກພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ | ກົມປ່າໄມ້<br><br>ກະຊວງກະສິກຳ ແລະ ປ່າໄມ້ | ຄຳແນະນຳ ກ່ຽວກັບການຂຸດຄົ້ນໄມ້ ແລະ ເຄື່ອນຍ້າຍໄມ້ຕິ້ວ,ການເຄື່ອນຍ້າຍຖ່ານຂາວ ທີ່ຜະລິດມາຈາກໄມ້ຕິ້ວ ພາຍໃນ ແລະ ສົ່ງອອກຕ່າງປະເທດ ເລກທີ 0050/ກປ, ລົງວັນທີ 18 ກັນຍາ 2017. (ຂໍ້ 3.2)<br><br>ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019. (ມາດຕາ 95) | ກຳນົດຂັ້ນຕອນ, ແບບຟອມ ແລະ ເອກະສານປະກອບໃນການອອກອະນຸຍາດສົ່ງອອກຜະລິດຕະພັນຖ່ານຂາວ. | ສຳເລັດແລ້ວ ຕາມຄຳແນະນຳ 0050/ກປ, ລົງວັນທີ 18 ກັນຍາ 2017 |
| 2 | **ການອອກໃບອະນຸຍາດນຳເຂົ້າ - ສັດ ແລະ ຜະລິດຕະພັນສັດ**<br><br>ການນຳເຂົ້າ ສັດ ແລະ ຜະລິດຕະພັນສັດ ຕ້ອງປະຕິບັດຕາມເງື່ອນໄຂສະເພາະ ທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ 2 ຂອງຂໍ້ຕົກລົງ 0795/ກປ ແລະ ຍື່ນຄຳຮ້ອງຂໍອະນຸຍາດນຳເຂົ້າ ທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ 3 ຕໍ່ ກົມລ້ຽງສັດ ແລະ ການປະມົງ ເພື່ອອອກໃບອະນຸຍາດນຳເຂົ້າ ຕາມແບບພິມທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ 4. | ກົມລ້ຽງສັດ ແລະ ການປະມົງ<br><br>ກະຊວງກະສິກຳ ແລະ ປ່າໄມ້ | ຂໍ້ຕົກລົງ ວ່າດ້ວຍການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ເລກທີ 0795/ກປ, ລົງວັນທີ 18 ເມສາ 2019. (ມາດຕາ 6, 7, 8)<br><br>ດຳລັດ ວ່າດ້ວຍ ການຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບສັດ ເລກທີ 230/ລບ (ມາດຕາ 21)<br><br>ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016. (ມາດຕາ 45) | ກຳນົດຂັ້ນຕອນ, ເວລາ, ແບບຟອມ ແລະ ເອກະສານປະກອບສຳລັບການອອກອະນຸຍາດນຳເຂົ້າ ຢ່າງລະອຽດ. | ສຳເລັດແລ້ວ ຕາມຂໍ້ຕົກລົງ 0795/ກປ, ລົງວັນທີ 18 ເມສາ 2019 |
| 3 | **ການອອກໃບອະນຸຍາດສົ່ງອອກ - ສັດ ແລະ ຜະລິດຕະພັນສັດ**<br><br>ເມື່ອປະເທດປາຍທາງ ຮຽກຮ້ອງ, ການສົ່ງອອກສັດ ແລະ ຜະລິດຕະພັນສັດ ຕ້ອງຍື່ນຄຳຮ້ອງຕາມທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ 3 ຂອງຂໍ້ຕົກລົງ 0795/ກປ ຕໍ່ກົມລ້ຽງສັດ ແລະ ການປະມົງ ເພື່ອອອກໃບອະນຸຍາດສົ່ງອອກ ຕາມແບບພິມທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ 4. | ກົມລ້ຽງສັດ ແລະ ການປະມົງ<br><br>ກະຊວງກະສິກຳ ແລະ ປ່າໄມ້ | ຂໍ້ຕົກລົງ ວ່າດ້ວຍການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ເລກທີ 0795/ກປ, ລົງວັນທີ 18 ເມສາ 2019. (ມາດຕາ 13)<br><br>ດຳລັດ ວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບສັດ ເລກທີ 230/ລບ. (ມາດຕາ 31)<br><br>ກົດໝາຍ ວ່າດ້ວຍການຄຸ້ມຄອງ ການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016 | ກຳນົດຂັ້ນຕອນ, ເວລາ, ແບບຟອມ ແລະ ເອກະສານປະກອບສຳລັບການອອກອະນຸຍາດ ຢ່າງລະອຽດ. | ສຳເລັດແລ້ວ ຕາມຂໍ້ຕົກລົງ 0795/ກປ, ລົງວັນທີ 18 ເມສາ 2019 |



5

| ລ/ດ | ມາດຕະການ | ຂະແໜງການ | ນິຕິກຳ | ການປັບປຸງ | ໝາຍເຫດ |
|---|---|---|---|---|---|
| 4 | **ການອອກໃບຢັ້ງຢືນດ້ານສຸຂະພາບ ຫຼື ສຸຂານາໄມ ເພື່ອສົ່ງອອກ - ສັດ ແລະ ຜະລິດຕະພັນສັດ**<br><br>ເມື່ອປະເທດປາຍທາງ ຮຽກຮ້ອງ, ກົມລ້ຽງສັດ ແລະ ການປະມົງ ຈະອອກໃບຢັ້ງຢືນດ້ານສຸຂະພາບ ຫຼື ສຸຂານາໄມ ເພື່ອສົ່ງອອກສັດ ແລະ ຜະລິດຕະພັນສັດ ຕາມຄຳຮ້ອງທີ່ກຳນົດໄວ້ ໃນເອກະສານຊ້ອນທ້າຍ 5. | ກົມລ້ຽງສັດ ແລະ ການປະມົງ<br><br>ກະຊວງກະສິກຳ ແລະ ປ່າໄມ້ | ຂໍ້ຕົກລົງ ວ່າດ້ວຍການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ເລກທີ 0795/ກປ, ລົງວັນທີ 18 ເມສາ 2019. (ມາດຕາ 13)<br><br>ດຳລັດ ວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍ ສັດ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບສັດ ເລກທີ 230/ລບ. (ມາດຕາ 32) | ກຳນົດຂັ້ນຕອນ, ເວລາ, ແບບຟອມ ແລະ ເອກະສານປະກອບສຳລັບການອອກອະນຸຍາດ ຢ່າງລະອຽດ. | ສຳເລັດແລ້ວ ຕາມຂໍ້ຕົກລົງ 0795/ກປ, ລົງວັນທີ 18 ເມສາ 2019 |
| 5 | **ການອອກໃບອະນຸຍາດນຳເຂົ້າ - ປາ ແລະ ສັດນ້ຳປະເພດ II ແລະ III**<br><br>ການນຳເຂົ້າປາ ແລະ ສັດນ້ຳທີ່ກຳນົດໄວ້ ໃນບັນຊີ II ແລະ III ຂອງກົດໝາຍການປະມົງ 03/ສພຊ ຕ້ອງໄດ້ຮັບອະນຸຍາດນຳເຂົ້າ ຈາກກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້. | ກົມລ້ຽງສັດ ແລະ ການປະມົງ<br><br>ກະຊວງກະສິກຳ ແລະ ປ່າໄມ້ | ຂໍ້ຕົກລົງ ວ່າດ້ວຍການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ເລກທີ 4211/ກປ, ລົງວັນທີ 29 ພະຈິກ 2019. (ມາດຕາ 06-13)<br><br>ກົດໝາຍ ວ່າດ້ວຍ ການປະມົງ ເລກທີ 03/ສພຊ. (ມາດຕາ 29, 31, 32 ແລະ 33) | ກຳນົດຂັ້ນຕອນ, ເວລາ, ແບບຟອມ ແລະ ເອກະສານປະກອບສຳລັບການອອກອະນຸຍາດ ຢ່າງລະອຽດ. | ສຳເລັດແລ້ວ ຕາມຂໍ້ຕົກລົງ 4211/ກປ, ລົງວັນທີ 29 ພະຈິກ 2019 |
| 6 | **ການອອກໃບຢັ້ງຢືນສຸຂານາໄມ ເພື່ອການສົ່ງອອກ - ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ**<br><br>ເມື່ອປະເທດປາຍທາງຮຽກຮ້ອງ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຈະອອກໃບຢັ້ງຢືນສຸຂານາໄມ ສຳລັບການສົ່ງອອກພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ໂດຍສອດຄ່ອງຕາມເງື່ອນໄຂຂອງປະເທດນຳເຂົ້າກຳນົດ ແລະ ປະຕິບັດຕາມບົດແນະນຳຂອງກົມປູກຝັງ. | ກົມປູກຝັງ<br><br>ກະຊວງກະສິກຳ ແລະ ປ່າໄມ້ | ບົດແນະນຳ ກ່ຽວກັບ ຫລັກການ ແລະ ການຢັ້ງຢືນສຸຂານາໄມພືດ ສຳຫລັບການສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ, ເລກທີ 2880/ກປຝ, ລົງວັນທີ 11 ທັນວາ 2019. (ຂໍ້ 1.1 ແລະ 1.2 ຂອງໂລແມັງ I; ໂລແມັງ IV)<br><br>ຂໍ້ຕົກລົງ ວ່າດ້ວຍມາດຕະການສຸຂານາໄມພືດ ສຳລັບການສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເລກທີ 2986/ກປ, ລົງວັນທີ 28 ມິຖຸນາ 2019. (ມາດຕາ 14)<br><br>ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016. (ມາດຕາ 38) | ສ້າງບົດແນະນຳ ທີ່ກຳນົດຂັ້ນຕອນ, ເວລາ, ແບບຟອມ ແລະ ເອກະສານປະກອບ ໃນການອອກໃບຢັ້ງຢືນສຸຂານາໄມ; ພ້ອມທັງການແບ່ງຂັ້ນຄຸ້ມຄອງ ລະຫວ່າງຂັ້ນສູນກາງ ແລະ ທ້ອງຖິ່ນ (ແຂວງ ຫຼື ເມືອງ). | ສຳເລັດແລ້ວ ຕາມບົດແນະນຳ 2880/ກປຝ, ລົງວັນທີ 11 ທັນວາ 2019 |

| ລ/ດ | ມາດຕະການ | ຂະແໜງການ | ນິຕິກຳ | ການປັບປຸງ | ໝາຍເຫດ |
|---|---|---|---|---|---|
| 7 | **ການອອກໃບອະນຸຍາດນຳເຂົ້າ - ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ຢູ່ໃນບັນຊີຕ້ອງຂໍອະນຸຍາດ**<br><br>ການນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ຢູ່ໃນບັນຊີຕ້ອງຂໍອະນຸຍາດນຳເຂົ້າ ຕ້ອງຍື່ນຄຳຮ້ອງຕໍ່ ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ເພື່ອພິຈາລະນາ ອອກໃບອະນຸຍາດນຳເຂົ້າ. | ກົມປູກຝັງ<br><br>ກະຊວງກະສິກຳ ແລະ ປ່າໄມ້ | ບົດແນະນຳ ກ່ຽວກັບ ການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ, ເລກທີ 2881/ກປຝ, ລົງວັນທີ 11 ທັນວາ 2019. (ຂໍ້ 2 ແລະ 3)<br><br>ຂໍ້ຕົກລົງ ວ່າດ້ວຍມາດຕະການສຸຂານາໄມພືດ ສຳລັບ ການນຳເຂົ້າ ແລະ ສົ່ງຜ່ານພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເລກທີ 2985/ກປ, ລົງວັນທີ 28 ມິຖຸນາ 2019. (ມາດຕາ 6, 14, 15)<br><br>ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016. (ມາດຕາ 31 ແລະ 32) | ສ້າງບົດແນະນຳ ທີ່ກຳນົດຂັ້ນຕອນ, ເວລາ, ແບບຟອມ ແລະ ເອກະສານປະກອບ ໃນການອອກອະນຸຍາດ; ພ້ອມທັງການແບ່ງຂັ້ນຄຸ້ມຄອງ ລະຫວ່າງຂັ້ນສູນກາງ ແລະ ທ້ອງຖິ່ນ (ແຂວງ ຫຼື ເມືອງ).<br><br>ສຳເລັດການສ້າງບັນຊີພືດ ແລະ ຜະລິດຕະພັນພືດ ຕ້ອງຄວບຄຸມ ທີ່ຢູ່ໃນບັນຊີຕ້ອງຂໍອະນຸຍາດນຳເຂົ້າ. | ສຳເລັດແລ້ວ ຕາມບົດແນະນຳ 2881/ກປຝ, ລົງວັນທີ 11 ທັນວາ 2019<br><br>ສ້າງບັນຊີສັດຕູພືດກັກກັນ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ຄາດວ່າຈະສຳເລັດ ປີ 2020 |
| 8 | **ການອອກອະນຸມັດຮັບຮອງ - ແຜນນຳເຂົ້າປະຈຳປີ ຂອງວິສາຫະກິດ**<br><br>ການນຳເຂົ້າສິນຄ້າ ເພື່ອຮັບໃຊ້ແກ່ວິສາຫະກິດ ທີ່ລົງທຶນໃນກິດຈະການທີ່ໄດ້ຮັບນະໂຍບາຍດ້ານພາສີ ແລະ ອາກອນ ຕ້ອງໄດ້ຮັບການອະນຸມັດຮັບຮອງແຜນນຳເຂົ້າປະຈຳປີ ຈາກກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ໂດຍຜ່ານການຢັ້ງຢືນຮັບຮອງທາງດ້ານເຕັກນິກຂອງຂະແໜງ ການທີ່ກ່ຽວຂ້ອງ. | ກົມສົ່ງເສີມການລົງທຶນ<br><br>ກະຊວງແຜນການ ແລະ ການລົງທຶນ | ກົດໝາຍ ວ່າດ້ວຍ ການປັບປຸງມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ ປີ 2016 ເລກທີ 80/ສພຊ, ລົງວັນທີ 04 ທັນວາ 2019<br><br>ບົດແນະນຳ ວ່າດ້ວຍການໃຫ້ນະໂຍບາຍສົ່ງເສີມການລົງທຶນດ້ານພາສີ ແລະ ອາກອນມູນຄ່າເພີ່ມ ສຳລັບແຜນນຳເຂົ້າ ຂອງວິສາຫະກິດ ເລກທີ 01/ຄລທ.ສ, ລົງວັນທີ 02 ມັງກອນ 2019. (ຂໍ້ 8)<br><br>ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) ເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016. (ມາດຕາ 9 ແລະ 20) | ປັບປຸງບົດແນະນຳ 01 ເພື່ອກຳນົດ ຂັ້ນຕອນ, ເວລາ ແລະ ເອກະສານປະກອບ ສຳລັບການຢັ້ງຢືນທາງດ້ານເຕັກນິກ ຂອງຂະແໜງການທີ່ກ່ຽວຂ້ອງ ແລະ ການອະນຸມັດຮັບຮອງຂອງຂະແໜງແຜນການ ແລະ ການລົງທຶນ ໂດຍສອດຄ່ອງກັບ:<br>- ກົດໝາຍ ວ່າດ້ວຍການປັບປຸງມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ ປີ 2016 ເລກທີ 80/ສພຊ, ລົງວັນທີ 04 ທັນວາ 2019 (ມາດຕາ 12).<br>- ນິຕິກຳພັນຂະຫຍາຍກົດໝາຍດັ່ງກ່າວ (ເປັນຕົ້ນ ມາດຕາ 09, 10, 11, 15). | ສຳເລັດ ຕາມກົດໝາຍປັບປຸງມາດຕາ 12 ຂອງກົດໝາຍ ວ່າດ້ວຍການສົ່ງ ເສີມການລົງທຶນ ສະບັບປັບປຸງປີ 2016 ເລກທີ 80/ສພຊ, ລົງວັນທີ 04 ທັນວາ 2019<br><br>ສ້າງນິຕິກຳພັນຂະຫຍາຍ ກົດໝາຍ 14/ສພຊ, ລົງວັນທີ 17 ພະຈິກ 2016 ຊຶ່ງຄາດວ່າຈະສຳເລັດໃນ ປີ 2020 |
| 9 | **ການຍົກເລີກການອອກໃບຢັ້ງຢືນການນຳເຂົ້າ - ຊິ້ນສ່ວນຍານພາຫະນະ**<br><br>ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ຍົກເລີກການອອກໃບຢັ້ງຢືນການນຳເຂົ້າ ຊິ້ນສ່ວນຍານພາຫະນະ ເພື່ອມາຜະລິດ ແລະ ປະກອບຢູ່ໂຮງງານ ໃນຂອບເຂດທົ່ວປະເທດ. | ກົມອຸດສາຫະກຳ ແລະ ຫັດຖະກຳ<br><br>ກະຊວງອຸດສາຫະກຳ ແລະ ການຄ້າ | ຄຳສັ່ງກ່ຽວກັບ ການຍົກເລີກການອອກໃບຢັ້ງຢືນນຳເຂົ້າ ຊິ້ນສ່ວນຍານພາຫະນະ ເພື່ອມາຜະລິດ ແລະ ປະກອບຢູ່ໂຮງງານ ເລກທີ 1848/ອຄ.ກອຫ, ລົງວັນທີ 26 ທັນວາ 2019. (ຂໍ້ 1) | ສ້າງນິຕິກຳ ເພື່ອຍົກເລີກການອອກໃບຢັ້ງຢືນການນຳເຂົ້າຊິ້ນສ່ວນຍານພາຫະນະ ເພື່ອມາຜະລິດ ແລະ ປະກອບຢູ່ໂຮງງານ | ສຳເລັດແລ້ວ ຕາມຄຳສັ່ງ 1848/ອຄ.ກອຫ, ລົງວັນທີ 26 ທັນວາ 2019 |



5

| ລ/ດ | ມາດຕະການ | ຂະແໜງການ | ນິຕິກຳ | ການປັບປຸງ | ໝາຍເຫດ |
|---|---|---|---|---|---|
| 10 | **ການອອກໃບຢັ້ງຢືນຄຸນນະພາບນຳເຂົ້າ - ອາຫານສັດ**<br><br>ການນຳເຂົ້າອາຫານສັດ ຕ້ອງໄດ້ຮັບການຢັ້ງຢືນຄຸນນະພາບ ຈາກ ສູນວິໄຈອາຫານສັດ, ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້. | ກົມລ້ຽງສັດ ແລະ ການປະມົງ<br><br>ກະຊວງກະສິກຳ ແລະ ປ່າໄມ້ | ດຳລັດວ່າດ້ວຍ ອາຫານສັດ, ເລກທີ 02/ລບ, ລົງວັນທີ 02 ມັງກອນ 2020. (ມາດຕາ 19, 20, 28) | ສ້າງລະບຽບການທີ່ກຳນົດຂັ້ນຕອນ, ແບບຟອມ ແລະ ເອກະສານປະກອບ ໃນການອອກໃບຢັ້ງຢືນຄຸນນະພາບ. | ສຳເລັດແລ້ວ ຕາມດຳລັດ 02/ລບ, ລົງວັນທີ 02 ມັງກອນ 2020 |
| 11 | **ການອອກໃບອະນຸຍາດສົ່ງອອກ - ເຄື່ອງປ່າຂອງດົງ**<br><br>ການສົ່ງອອກເຄື່ອງປ່າຂອງດົງ ຕ້ອງໄດ້ຮັບອະນຸຍາດສົ່ງອອກ ໂດຍຂະແໜງກະສິກຳ ແລະ ປ່າໄມ້ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ຕາມການແບ່ງຂັ້ນຄຸ້ມຄອງ. | ກົມປ່າໄມ້<br><br>ກະຊວງກະສິກຳ ແລະ ປ່າໄມ້ | ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019. (ມາດຕາ 98)<br><br>ຂໍ້ຕົກລົງ ວ່າດ້ວຍການກຳນົດບັນຊີເຄື່ອງປ່າຂອງດົງ I, II, III ເລກທີ 0279/ກປ, ລົງວັນທີ 19 ກຸມພາ 2020. | ສ້າງລະບຽບການຜັນຂະຫຍາຍ ກົດໝາຍ 64/ສພຊ ເພື່ອກຳນົດເງື່ອນໄຂ, ຂັ້ນຕອນ, ເວລາ, ແບບຟອມ ແລະ ເອກະສານປະກອບ ໃນການອອກອະນຸຍາດສົ່ງອອກເຄື່ອງປ່າຂອງດົງປະເພດ (I, II ແລະ III), ທີ່ຕ້ອງຂໍອະນຸຍາດສົ່ງອອກ ນຳຂະແໜງກະສິກຳ ແລະ ປ່າໄມ້ ຢູ່ສູນກາງ ແລະ ທ້ອງຖິ່ນ (ເມືອງ, ແຂວງ) ຢ່າງລະອຽດ. | ສຳເລັດການສ້າງບັນຊີເຄື່ອງປ່າຂອງດົງ ຕາມຂໍ້ຕົກລົງ 0279/ກປ, ລົງວັນທີ 19 ກຸມພາ 2020<br><br>ສຳລັບການສ້າງລະບຽບການຜັນຂະຫຍາຍ ຄາດວ່າຈະສຳເລັດໃນປີ 2020 |
| 12 | **ການອອກໃບອະນຸຍາດເຄື່ອນຍ້າຍພາຍໃນ - ເຄື່ອງປ່າຂອງດົງ**<br><br>ການເຄື່ອນຍ້າຍເຄື່ອງປ່າຂອງດົງ ພາຍໃນ ຕ້ອງໄດ້ຮັບອະນຸຍາດ ໂດຍຂະແໜງ ກະສິກຳ ແລະ ປ່າໄມ້ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ຕາມການແບ່ງຂັ້ນຄຸ້ມຄອງ. | ກົມປ່າໄມ້<br><br>ກະຊວງກະສິກຳ ແລະ ປ່າໄມ້ | ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019. (ມາດຕາ 37)<br><br>ຂໍ້ຕົກລົງ ວ່າດ້ວຍການກຳນົດບັນຊີເຄື່ອງປ່າຂອງດົງ I, II, III ເລກທີ 0279/ກປ, ລົງວັນທີ 19 ກຸມພາ 2020. | ສ້າງລະບຽບການຜັນຂະຫຍາຍ ກົດໝາຍ 64/ສພຊ ເພື່ອກຳນົດເງື່ອນໄຂ, ຂັ້ນຕອນ, ເວລາ, ແບບຟອມ ແລະ ເອກະສານປະກອບ ໃນການອອກອະນຸຍາດເຄື່ອນຍ້າຍເຄື່ອງປ່າຂອງດົງປະເພດ (I, II ແລະ III), ທີ່ຕ້ອງຂໍອະນຸຍາດເຄື່ອນຍ້າຍ ນຳຂະແໜງກະສິກຳ ແລະ ປ່າໄມ້ ຢູ່ສູນກາງ ແລະ ທ້ອງຖິ່ນ (ເມືອງ, ແຂວງ) ຢ່າງລະອຽດ. | ສຳເລັດການສ້າງບັນຊີເຄື່ອງປ່າຂອງດົງ ຕາມຂໍ້ຕົກລົງ 0279/ກປ, ລົງວັນທີ 19 ກຸມພາ 2020<br><br>ສຳລັບການສ້າງລະບຽບການຜັນຂະຫຍາຍ ຄາດວ່າຈະສຳເລັດໃນປີ 2020 |
| 13 | **ການອອກໃບອະນຸຍາດນຳເຂົ້າ - ຜະລິດຕະພັນສິ່ງພິມ**<br><br>ການນຳເຂົ້າຜະລິດຕະພັນສິ່ງພິມ ຕ້ອງໄດ້ຮັບອະນຸຍາດນຳເຂົ້າຈາກກົມພິມຈຳໜ່າຍ, ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ | ກົມພິມຈຳໜ່າຍ<br><br>ກະຊວງຖະແຫຼງຂ່າວ ວັດທະນາທຳ ແລະ ທ່ອງທ່ຽວ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດ ນຳເຂົ້າ ແລະ ຈຳໜ່າຍ ຜະລິດຕະພັນສິ່ງພິມ ເລກທີ 518/ຖວທ. (ມາດຕາ 6)<br><br>ກົດໝາຍ ວ່າດ້ວຍ ການພິມຈຳໜ່າຍ ເລກທີ 05/ສພຊ. (ມາດຕາ 25) | ປັບປຸງຂໍ້ຕົກລົງ ເລກທີ 518/ກປ ເພື່ອກຳນົດເງື່ອນໄຂ, ຂັ້ນຕອນ, ເວລາ ແລະ ເອກະສານປະກອບ ໃນການຈົດທະບຽນສິ່ງພິມ ແລະ ອອກອະນຸຍາດນຳເຂົ້າສິ່ງພິມ ໃຫ້ກະທັດຮັດ. | ປັບປຸງນິຕິກຳ ຄາດວ່າຈະສຳເລັດໃນງວດ 3 ປີ 2020 |

| ລ/ດ | ມາດຕະການ | ຂະແໜງການ | ນິຕິກຳ | ການປັບປຸງ | ໝາຍເຫດ |
|---|---|---|---|---|---|
| 14 | **ການອອກໃບອະນຸຍາດນຳເຂົ້າ - ຍານພາຫະນະທາງບົກ**<br><br>ການນຳເຂົ້າຍານພາຫະນະທາງບົກ ທຸກປະເພດທີ່ແລ່ນດ້ວຍເຄື່ອງຈັກ, ຍົກເວັ້ນລົດສາມລໍ້ (8701.20;8701.30.20; 8701.90; 8702; 8703; 8704; 8705 ແລະ 8711) ຕ້ອງໄດ້ຮັບອະນຸຍາດນຳເຂົ້າຈາກກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ. | ກົມການນຳເຂົ້າ ແລະ ສົ່ງອອກ<br><br>ກະຊວງອຸດສາຫະກຳ ແລະ ການຄ້າ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດນຳເຂົ້າ ແລະ ການຈຳໜ່າຍ ລົດ ຢູ່ ສປປ ລາວ ເລກທີ 0075/ ອຄ.ກຂອ. (ມາດຕາ 6) | ປັບປຸງຂໍ້ຕົກລົງ ເລກທີ 0075/ອຄ.ກຂອ ເພື່ອລຶບລ້າງໃບອະນຸຍາດນຳເຂົ້າ. ຕໍ່ໄປ ການນຳເຂົ້າແຕ່ລະຄັ້ງ ແມ່ນສາມາດດຳເນີນຂັ້ນຕອນການແຈ້ງພາສີ ໄດ້ເລີຍ. | ປັບປຸງນິຕິກຳ ຄາດວ່າຈະສຳເລັດໃນງວດ 4 ປີ 2020 |
| 15 | **ການອອກໃບອະນຸຍາດນຳເຂົ້າ - ອາຍແກັສ**<br><br>ການນຳເຂົ້າອາຍແກັສ ຕ້ອງໄດ້ຮັບອະນຸຍາດນຳເຂົ້າຈາກກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ. | ກົມການນຳເຂົ້າ ແລະ ສົ່ງອອກ<br><br>ກະຊວງອຸດສາຫະກຳ ແລະ ການຄ້າ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດ ນຳເຂົ້າ ແລະ ຈຳໜ່າຍ ອາຍແກັສ ຢູ່ ສປປ ລາວ ເລກທີ 0238/ ອຄ.ກຂອ. (ມາດຕາ 5) | ປັບປຸງຂໍ້ຕົກລົງ ເລກທີ 0238/ອຄ.ກຂອ ເພື່ອລຶບລ້າງໃບອະນຸຍາດນຳເຂົ້າ. ຕໍ່ໄປ ການນຳເຂົ້າແຕ່ລະຄັ້ງ ແມ່ນສາມາດດຳເນີນຂັ້ນຕອນການແຈ້ງພາສີ ໄດ້ເລີຍ. | ປັບປຸງນິຕິກຳ ຄາດວ່າຈະສຳເລັດໃນງວດ 4 ປີ 2020 |
| 16 | **ການອອກໃບອະນຸຍາດນຳເຂົ້າ - ຜະລິດຕະພັນໄມ້**<br><br>ການນຳເຂົ້າໄມ້ທ່ອນ, ຕໍໄມ້, ປຸດໄມ້, ໄມ້ແປຮູບ ແລະ ໄມ້ເຄິ່ງສຳເລັດຮູບ ຊຶ່ງໄດ້ລະບຸໄວ້ ໃນໝວດລະຫັດເຄົ້າ 4403; 4407.10 – 4407.28 , 0601 ທີ່ນຳເຂົ້າມາຕ້ອງໄດ້ຮັບອະນຸຍາດນຳເຂົ້າຈາກກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ. | ກົມການນຳເຂົ້າ ແລະ ສົ່ງອອກ<br><br>ກະຊວງອຸດສາຫະກຳ ແລະ ການຄ້າ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດ ນຳເຂົ້າ ແລະ ຈຳໜ່າຍ ໄມ້ ເລກທີ 0451/ອຄ.ກຂອ. (ມາດຕາ 5) | ທົບທວນຄືນ ແລະ ປັບປຸງ ນິຕິກຳ 0451/ອຄ.ກຂອ ເພື່ອກຳນົດຂັ້ນຕອນ, ເວລາ ແລະ ເອກະສານປະກອບໃນການອອກອະນຸຍາດນຳເຂົ້າ ລະອຽດ. ພ້ອມທັງກຳນົດບັນຊີຜະລິດຕະພັນໄມ້ ທີ່ຕ້ອງຂໍອະນຸຍາດນຳເຂົ້າໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ວາງອອກ. | ປັບປຸງນິຕິກຳ ຄາດວ່າຈະສຳເລັດໃນງວດ 4 ປີ 2020 |
| 17 | **ການອອກໃບອະນຸຍາດນຳເຂົ້າ - ເຂົ້າ**<br><br>ການນຳເຂົ້າ ເຂົ້າກ້ອງ, ປາຍເຂົ້າ, ເຂົ້າທີ່ສີ ເຄິ່ງໜຶ່ງແລ້ວ ຫຼື ສີທັງໝົດ ຈະຂັດ ຫຼື ບໍ່ກໍຕາມ ຕ້ອງໄດ້ຮັບອະນຸຍາດຈາກພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ. | ກົມການນຳເຂົ້າ ແລະ ສົ່ງອອກ<br><br>ກະຊວງອຸດສາຫະກຳ ແລະ ການຄ້າ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດ ນຳເຂົ້າ ແລະ ສົ່ງອອກ ເຂົ້າ ເລກທີ 0452/ອຄ.ກຂອ. (ມາດຕາ 5) | ປັບປຸງຂໍ້ຕົກລົງ 0452/ອຄ.ກຂອ ເພື່ອກຳນົດເງື່ອນໄຂ, ຂັ້ນຕອນ, ເວລາ ແລະ ເອກະສານປະກອບສຳລັບການອອກອະນຸຍາດນຳເຂົ້າ ພ້ອມທັງກຳນົດມາດຕະການທີ່ເໝາະສົມ ແລະ ສອດຄ່ອງ ແນໃສ່ຮັບປະກັນຄວາມພຽງພໍດ້ານສະບຽງອາຫານ. | ປັບປຸງນິຕິກຳ ຄາດວ່າຈະສຳເລັດໃນງວດ 4 ປີ 2020 |
| 18 | **ການອອກໃບອະນຸຍາດສົ່ງອອກ - ເຂົ້າ**<br><br>ການສົ່ງອອກເຂົ້າເປືອກ, ເຂົ້າກ້ອງ, ປາຍເຂົ້າ, ເຂົ້າທີ່ສີເຄິ່ງໜຶ່ງແລ້ວ ຫຼື ສີທັງໝົດຈະຂັດ ຫລື ບໍ່ ກໍ່ຕາມ ຕ້ອງໄດ້ຮັບອະນຸຍາດສົ່ງອອກຈາກພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ. | ກົມການນຳເຂົ້າ ແລະ ສົ່ງອອກ<br><br>ກະຊວງອຸດສາຫະກຳ ແລະ ການຄ້າ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດ ນຳເຂົ້າ ແລະ ສົ່ງອອກ ເຂົ້າ ເລກທີ 0452/ອຄ.ກຂອ. (ມາດຕາ 5) | ປັບປຸງຂໍ້ຕົກລົງ 0452/ອຄ.ກຂອ ເພື່ອກຳນົດເງື່ອນໄຂ, ຂັ້ນຕອນ, ເວລາ ແລະ ເອກະສານປະກອບສຳລັບການອອກອະນຸຍາດສົ່ງອອກ ພ້ອມທັງກຳນົດມາດຕະການທີ່ເໝາະສົມ ແລະ ສອດຄ່ອງ ແນໃສ່ຮັບປະກັນຄວາມພຽງພໍດ້ານສະບຽງອາຫານ. | ປັບປຸງນິຕິກຳ ຄາດວ່າຈະສຳເລັດໃນງວດ 4 ປີ 2020 |

| ລ/ດ | ມາດຕະການ | ຂະແໜງການ | ນິຕິກຳ | ການປັບປຸງ | ໝາຍເຫດ |
|---|---|---|---|---|---|
| 19 | **ການອອກໃບຢັ້ງຢືນການສົ່ງອອກ - ຜະລິດຕະພັນໄມ້**<br><br>ຜະລິດຕະພັນໄມ້ (ດັ່ງທີ່ໄດ້ລະບຸໄວ້ໃນຕາຕະລາງຊ້ອນທ້າຍ 1, 2, ແລະ 3 ຂອງຂໍ້ຕົກລົງວ່າດ້ວຍການຮັບຮອງເອົາລາຍການຜະລິດຕະພັນໄມ້ເພື່ອການສົ່ງອອກ (ສະບັບປັບປຸງ) ເລກທີ 0939/ອຄ.ກອຫ, ລົງວັນທີ 01 ສິງຫາ 2019 ຕ້ອງໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຂອງຜະລິດຕະພັນໄມ້ສົ່ງອອກ ຈາກກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ. | ກົມການນຳເຂົ້າ ແລະ ສົ່ງອອກ<br><br>ກົມອຸດສາຫະກຳ ແລະ ຫັດຖະກຳ<br><br>ກະຊວງອຸດສາຫະກຳ ແລະ ການຄ້າ | ຄຳສັ່ງແນະນຳ ກ່ຽວກັບ ຂັ້ນຕອນການຢັ້ງຢືນຜະລິດຕະພັນໄມ້ຂັ້ນລຶດ ເພື່ອສົ່ງອອກໄປຕ່າງປະເທດ ເລກທີ 2143/ອຄ.ກຂອ, ລົງວັນທີ 25 ພະຈິກ 2016. (ຂໍ້ 1) | ສ້າງ ແລະ ປັບປຸງນິຕິກຳທີ່ກ່ຽວຂ້ອງຄື:<br>- ສ້າງຄຳແນະນຳ ກ່ຽວກັບການສົ່ງອອກໄມ້ປູກ ໄປຕ່າງປະເທດ ໃຫ້ມີຄວາມກະທັດຮັດງ່າຍດາຍ.<br>- ປັບປຸງຄຳສັ່ງແນະນຳ 2143/ອຄ.ກຂອ ເພື່ອກຳນົດເງື່ອນໄຂ, ຂັ້ນຕອນ, ເວລາ ແລະ ເອກະສານປະກອບ ສຳລັບການສົ່ງອອກຜະລິດຕະພັນໄມ້ ໃຫ້ມີຄວາມຊັດເຈນ ແລະ ເປັນເອກະພາບ. | ສ້າງຄຳແນະນຳ ກ່ຽວກັບການສົ່ງອອກໄມ້ປູກ ຄາດວ່າຈະສຳເລັດໃນງວດ 2 ປີ 2020<br><br>ປັບປຸງຄຳສັ່ງແນະນຳ 2143/ອຄ.ກຂອ ຄາດວ່າຈະສຳເລັດໃນງວດ 4 ປີ 2020 |
| 20 | **ການອອກໃບອະນຸຍາດນຳເຂົ້າ - ນ້ຳມັນເຊື້ອໄຟ**<br><br>ການນຳເຂົ້ານ້ຳມັນເຊື້ອໄຟ ຕ້ອງໄດ້ຂໍອະນຸຍາດນຳເຂົ້າຈາກກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ. | ກົມການນຳເຂົ້າ ແລະ ສົ່ງອອກ<br><br>ກະຊວງອຸດສາຫະກຳ ແລະ ການຄ້າ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດ ນຳເຂົ້າ ແລະ ຈຳໜ່າຍ ນ້ຳມັນເຊື້ອໄຟ ຢູ່ ສປປ ລາວ ເລກທີ 0237/ອຄ.ກຂອ. (ມາດຕາ 6)<br><br>ດຳລັດວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.(ມາດຕາ 15) | ປັບປຸງຂໍ້ຕົກລົງ ເລກທີ 0237/ອຄ.ກຂອ ເພື່ອລຶບລ້າງໃບອະນຸຍາດນຳເຂົ້ານ້ຳມັນເຊື້ອໄຟ ບາງປະເພດ ເຊັ່ນ: ນ້ຳມັນເຄື່ອງ, ນ້ຳມັນລໍ່ລື່ນ, ນ້ຳມັນເຕົາ, ນ້ຳມັນໄຮໂດຣລິກ. ຕໍ່ໄປ ການນຳເຂົ້າແຕ່ລະຄັ້ງ ແມ່ນສາມາດດຳເນີນຂັ້ນຕອນການແຈ້ງພາສີ ໄດ້ເລີຍ. | ປັບປຸງນິຕິກຳ ຄາດວ່າຈະສຳເລັດໃນງວດ 4 ປີ 2020 |
| 21 | **ການອອກໃບຢັ້ງຢືນການນຳເຂົ້າ - ອຸປະກອນໄອຊີທີ**<br><br>ການນຳເຂົ້າອຸປະກອນໄອຊີທີ ຕ້ອງໄດ້ຮັບອະນຸຍາດຂໍໃບຢັ້ງຢືນການນຳເຂົ້າອຸປະກອນ ຈາກກົມເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານ, ກະຊວງໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ. | ກົມເຕັກໂນໂລຊີ<br><br>ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ສື່ສານ | ຂໍ້ຕົກລົງ ວ່າດ້ວຍ ການນຳເຂົ້າ ແລະ ຈຳໜ່າຍ ອຸປະກອນໄອຊີທີ ສະບັບເລກທີ 3201/ປທສ, ລົງວັນທີ 16 ພະຈິກ 2016. (ມາດຕາ 13)<br><br>ຂໍ້ຕົກລົງ ວ່າດ້ວຍການກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກອຸປະກອນໄອຊີທີ (ICT) ເລກທີ 2118/ປທສ, ລົງວັນທີ 08 ສິງຫາ 2018. (ມາດຕາ 36) | ສ້າງຄຳແນະນຳພັນຂະຫຍາຍຂໍ້ຕົກລົງ 3201/ປທສ ເພື່ອກຳນົດຂັ້ນຕອນ, ແບບຟອມ ແລະ ເອກະສານປະກອບ ສຳລັບການຂໍອະນຸຍາດນຳເຂົ້າ ໃຫ້ມີຄວາມຊັດເຈນ ພ້ອມດ້ວຍການແບ່ງຂອດການຄຸ້ມຄອງອອກອະນຸຍາດ ລະຫວ່າງຂັ້ນສູນກາງ ແລະ ທ້ອງຖິ່ນ. | ປັບປຸງນິຕິກຳ ຄາດວ່າຈະສຳເລັດ ໃນງວດທີ 4 ປີ 2020 |

| ລ/ດ | ມາດຕະການ | ຂະແໜງການ | ນິຕິກຳ | ການປັບປຸງ | ໝາຍເຫດ |
|---|---|---|---|---|---|
| 22 | **ການອອກໃບອະນຸຍາດນຳເຂົ້າ - ເຄື່ອງບິນແບບບໍ່ມີຄົນຂັບທີ່ມີນ້ຳໜັກເກີນ 200 ກຣາມ.**<br><br>ການນຳເຂົ້າເຄື່ອງບິນແບບບໍ່ມີຄົນຂັບທີ່ມີນ້ຳໜັກເກີນ 200 ກຣາມ ຕ້ອງໄດ້ຮັບອະນຸຍາດນຳເຂົ້າ ຈາກ ກົມຄົ້ນຄວາມຖີ່, ກະຊວງໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ. | ກົມຄົ້ນຄວາມຖີ່<br><br>ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ສື່ສານ | ຂໍ້ຕົກລົງວ່າດ້ວຍການນຳໃຊ້ເຄື່ອງບິນບໍ່ມີຄົນຂັບ ສະບັບເລກທີ 3374/ປທສ, ລົງວັນທີ 14 ພະຈິກ 2017. (ມາດຕາ 6 ແລະ ມາດຕາ 9, ຂໍ້ 1) | ທົບທວນຄືນ ແລະ ປັບປຸງຂໍ້ຕົກລົງ 3374/ປທສ ເພື່ອເອກະພາບກັນໃນການຄຸ້ມຄອງ ລະຫວ່າງ 03 ຂະແໜງການຄື: ຂະແໜງ ປທສ, ຍທຂ ແລະ ຖວທ. ນອກຈາກນີ້, ກຳນົດເງື່ອນໄຂ, ຂັ້ນຕອນ, ແບບຟອມ ແລະ ເອກະສານປະກອບ ສຳລັບການຂໍອະນຸຍາດນຳເຂົ້າ ໃຫ້ມີຄວາມຊັດເຈນ. | ປັບປຸງນິຕິກຳ ຄາດວ່າຈະສຳເລັດ ໃນງວດທີ 4 ປີ 2020 |
| 23 | **ການອອກໃບອະນຸຍາດນຳເຂົ້າ - ເຄື່ອງສື່ສານໄຟນີ**<br><br>ການນຳເຂົ້າເຄື່ອງສື່ສານໄຟນີ ຕ້ອງໄດ້ຮັບອະນຸຍາດນຳເຂົ້າຈາກກົມຄົ້ນຄວາມຖີ່, ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ສື່ສານ. | ກົມຄົ້ນຄວາມຖີ່<br><br>ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ສື່ສານ | ແຈ້ງການ ກ່ຽວກັບ ການນຳເຂົ້າ, ການຈຳໜ່າຍ ແລະ ການນຳໃຊ້ ເຄື່ອງວິທະຍຸສື່ສານ (ໄຟນີ) ເລກທີ 1229/ປທສ.ຫກ, ລົງວັນທີ 13 ສິງຫາ 2013. (ຂໍ້ I) | ທົບທວນ ແລະ ປັບປຸງແຈ້ງການ 1229/ປທສ.ຫກ. ພ້ອມກຽວກັນ, ໃຫ້ກຳນົດລະອຽດ ກ່ຽວກັບເງື່ອນໄຂ, ຂັ້ນຕອນ, ເວລາ ແລະ ເອກະສານປະກອບສຳລັບການອອກອະນຸຍາດນຳເຂົ້າ. | ປັບປຸງນິຕິກຳ ຄາດວ່າຈະສຳເລັດ ໃນງວດທີ 4 ປີ 2020 |
| 24 | **ການອອກໃບອະນຸຍາດເຄື່ອນຍ້າຍພາຍໃນ - ໄມ້ທຳມະຊາດ**<br><br>ການເຄື່ອນຍ້າຍໄມ້ທຳມະຊາດ ພາຍໃນ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງກະສິກຳ ແລະ ປ່າໄມ້ ຄື:<br>- ການເຄື່ອນຍ້າຍພາຍໃນແຂວງ (ເມືອງຕໍ່ເມືອງ) ແມ່ນໃຫ້ຍື່ນຄຳຮ້ອງຕໍ່ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ.<br>ການເຄື່ອນຍ້າຍລະຫວ່າງແຂວງ ແມ່ນໃຫ້ຍື່ນຄຳຮ້ອງຕໍ່ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ. | ກົມປ່າໄມ້<br><br>ກະຊວງກະສິກຳ ແລະ ປ່າໄມ້ | ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019. (ມາດຕາ 35)<br><br>ຄຳແນະນຳ ກ່ຽວກັບການຈັດຕັ້ງຜັນຂະຫຍາຍຄຳສັ່ງ ເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດ ໄມ້ ເລກທີ 0054/ກປ, 09 ມິຖຸນາ 2016. (ຂໍ້ 2) | ສ້າງລະບຽບການຜັນຂະຫຍາຍກົດໝາຍ 64/ສພຊ ໂດຍກຳນົດ ຂັ້ນຕອນ, ແບບຟອມ ແລະ ເອກະສານປະກອບ ການເຄື່ອນຍ້າຍ ຢູ່ຂັ້ນເມືອງ ແລະ ແຂວງ ໃຫ້ກະທັດຮັດຂຶ້ນ ໂດຍສະເພາະການຫຼຸດຂັ້ນຕອນ, ແບບຟອມ ຫຼື ເອກະສານ ທີ່ຊ້ຳຊ້ອນກັນລະຫວ່າງຂັ້ນເມືອງ ແລະ ແຂວງ ຄື: ການເຄື່ອນຍ້າຍ ລະຫວ່າງເມືອງ ຕໍ່ ເມືອງ ແລະ ແຂວງ ຕໍ່ ແຂວງ ແມ່ນໃຫ້ຂັ້ນເມືອງ ຫຼື ແຂວງ ເປັນຜູ້ຢັ້ງຢືນ ແລະ ອອກອະນຸຍາດເຄື່ອນຍ້າຍປ່ອນກຽວເລີຍ. | ສ້າງລະບຽບການ ຄາດວ່າຈະສຳເລັດໃນປີ 2020 |

| ລ/ດ | ມາດຕະການ | ຂະແໜງການ | ນິຕິກຳ | ການປັບປຸງ | ໝາຍເຫດ |
|---|---|---|---|---|---|
| 25 | **ການອອກໃບຢັ້ງຢືນການນຳເຂົ້າ - ພາຫະນະ, ເຄື່ອງຈັກຂຸດຄົ້ນໄມ້, ກົນຈັກລາກແກ່ ແລະ ຂົນສົ່ງໄມ້**<br><br>ການນຳເຂົ້າ ພາຫະນະ, ເຄື່ອງຈັກຂຸດຄົ້ນໄມ້, ກົນຈັກລາກແກ່ ແລະ ຂົນສົ່ງໄມ້ ຕ້ອງໄດ້ຮັບການຢັ້ງຢືນເຫັນດີ ຈາກ ຂະແໜງກະສິກຳ ແລະ ປ່າໄມ້ ກ່ອນສະເໜີຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ພິຈາລະນາອອກອະນຸຍາດ. | ກົມປ່າໄມ້<br><br>ກະຊວງກະສິກຳ ແລະ ປ່າໄມ້ | ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019. (ມາດຕາ 38) | ສ້າງລະບຽບການຜັນຂະຫຍາຍ ກົດໝາຍ 64/ສພຊ ໂດຍກຳນົດເງື່ອນໄຂ, ຂັ້ນຕອນ, ເວລາ ແລະ ເອກະສານປະກອບ ສຳລັບການຢັ້ງຢືນການນຳເຂົ້າ ໃຫ້ກະທັດຮັດ ແລະ ຊັດເຈນ ໂດຍສະເພາະຂັ້ນຂອດທີ່ຊໍ້າຊ້ອນກັນ ຂອງຂະແໜງກະສິກຳ ແລະ ປ່າໄມ້ ແລະ ຂະແໜງອຸດສາຫະກຳ ແລະ ການຄ້າ. ພ້ອມທັງກຳນົດຂະໜາດ ແລະ ປະເພດຂອງເຄື່ອງຈັກຕັດໄມ້ (ເຊັ່ນ: ຂະໜາດແຮງມ້າ) ທີ່ຕ້ອງ ຫຼື ບໍ່ຕ້ອງ ຂໍອະນຸຍາດນຳເຂົ້າ, ຢັ້ງຢືນ ແລະ ການແບ່ງຂັ້ນຄຸ້ມຄອງ. | ສ້າງລະບຽບການຜັນຂະຫຍາຍ ຄາດວ່າຈະສຳເລັດໃນປີ 2020. |
| 26 | **ການອອກໃບອະນຸຍາດນຳເຂົ້າ - ອາຫານ ແລະ ຜະລິດຕະພັນອາຫານ**<br><br>ການນຳເຂົ້າອາຫານ ແລະ ຜະລິດຕະພັນອາຫານທຸກຊະນິດ ຕ້ອງໄດ້ຮັບອະນຸຍາດນຳເຂົ້າ ຈາກກົມອາຫານ ແລະ ຢາ, ພະແນກສາທາລະນະສຸກ ແຂວງ ແລະ ນະຄອນຫຼວງ. | ກົມອາຫານ ແລະ ຢາ<br><br>ກະຊວງສາທາລະນະສຸກ | ຂໍ້ຕົກລົງວ່າດ້ວຍການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານ ອາຫານ ເລກທີ 1166/ສທ, ລົງວັນທີ 21 ມິຖຸນາ 2018. (ມາດຕາ 13, 15, ແລະ 16)<br><br>ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງການຜະລິດ, ສົ່ງອອກ-ນຳເຂົ້າ ອາຫານທີ່ປອດໄພ ເລກທີ 856/ກຊສ, ລົງວັນທີ 12 ພຶດສະພາ 2006. (ມາດຕາ 17)<br><br>ກົດໝາຍ ວ່າດ້ວຍ ອາຫານ (ສະບັບປັບປຸງ) ເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013. (ມາດຕາ 35)<br><br>ຂໍ້ກຳນົດ ວ່າດ້ວຍ ການຈົດທະບຽນອາຫານ ເລກທີ 1600/ກຊສ, ລົງວັນທີ 25 ພະຈິກ 1994. (ມາດຕາ 15) | ປັບປຸງບັນດານິຕິກຳເຫຼົ່ານີ້ ໃຫ້ມີຄວາມສອດຄ່ອງກັນ ໂດຍສະເພາະການປັບປຸງ ຂັ້ນຕອນ, ເວລາ, ແບບຟອມ ແລະ ເອກະສານປະກອບ ສຳລັບການອອກອະນຸຍາດນຳເຂົ້າ ອາຫານ ແລະ ຜະລິດຕະພັນອາຫານ.<br><br>ສ້າງບັນຊີລາຍການອາຫານທີ່ມີຄວາມສ່ຽງສູງ, ກາງ ແລະ ຕ່ຳ ພ້ອມທັງແບ່ງຄວາມຮັບຜິດຊອບ ໃນການອອກອະນຸຍາດນຳເຂົ້າ ຢ່າງຊັດເຈນ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ. | ປັບປຸງນິຕິກຳທີ່ກ່ຽວຂ້ອງ ແລະ ສ້າງບັນຊີລາຍການອາຫານທີ່ມີຄວາມສ່ຽງ ຄາດວ່າຈະສຳເລັດໃນປີ 2020 |
| 27 | **ການອອກໃບອະນຸຍາດນຳເຂົ້າ - ຢາ**<br><br>ການນຳເຂົ້າຢາ ຕ້ອງໄດ້ຮັບອະນຸຍາດນຳເຂົ້າຈາກ ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ. | ກົມອາຫານ ແລະ ຢາ<br><br>ກະຊວງສາທາລະນະສຸກ | ຂໍ້ກຳນົດ ວ່າດ້ວຍ ການຂຶ້ນທະບຽນຢາ ເລກທີ 1441/ກຊສ, ລົງວັນທີ 13 ສິງຫາ 2003. (ມາດຕາ 8 ຂໍ້ 2, ມາດຕາ 10 ວັກ 4, ມາດຕາ 18) | ທົບທວນຄືນ ແລະ ປັບປຸງ ຂໍ້ກຳນົດ 1441/ກຊສ ໂດຍການກຳນົດລະອຽດ ກ່ຽວກັບຂັ້ນຕອນ, ເວລາ, ແບບຟອມ, ເອກະສານປະກອບ ສຳລັບການອອກອະນຸຍາດນຳເຂົ້າ ຢາ. | ປັບປຸງນິຕິກຳທີ່ກ່ຽວຂ້ອງ ຄາດວ່າຈະສຳເລັດໃນປີ 2020 |

| ລ/ດ | ມາດຕະການ | ຂະແໜງການ | ນິຕິກຳ | ການປັບປຸງ | ໝາຍເຫດ |
|---|---|---|---|---|---|
| 28 | **ການອອກໃບອະນຸຍາດນຳເຂົ້າ - ສານເສບຕິດ, ວັດຖຸອອກລິດຕໍ່ຈິດ-ປະສາດ ແລະ ສານເຄມີຕົ້ນ**<br><br>ການນຳເຂົ້າ ສານເສບຕິດ, ວັດຖຸອອກລິດຕໍ່ຈິດ-ປະສາດ ແລະ ສານເຄມີຕົ້ນ ຕ້ອງໄດ້ຮັບອະນຸຍາດຈາກກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ | ກົມອາຫານ ແລະ ຢາ<br><br>ກະຊວງສາທາລະນະສຸກ | ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຢາ ຫຼື ສານເສບຕິດ, ອອກລິດຕໍ່ຈິດ-ປະສາດ ແລະ ສານເຄມີຕົ້ນ ເລກທີ 456/ກຊສ, ລົງວັນທີ 19 ເມສາ 2006. (ມາດຕາ 9) | ທົບທວນຄືນ ແລະ ປັບປຸງ ຂໍ້ກຳນົດ 456/ກຊສ ໂດຍການກຳນົດລະອຽດ ກ່ຽວກັບຂັ້ນຕອນ, ເວລາ, ແບບຟອມ, ເອກະສານປະກອບ ສຳລັບການອອກອະນຸຍາດນຳເຂົ້າ. | ປັບປຸງນິຕິກຳທີ່ກ່ຽວຂ້ອງ ຄາດວ່າຈະສຳເລັດໃນປີ 2020 |
| 29 | **ການອອກໃບອະນຸຍາດນຳເຂົ້າ - ເຄື່ອງດື່ມທີ່ມີທາດເຫຼົ້າ**<br><br>ການນຳເຂົ້າເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງໄດ້ຮັບອະນຸຍາດນຳເຂົ້າ ຈາກກົມອານາໄມ ແລະ ສົ່ງເສີມສຸຂະພາບ, ກະຊວງສາທາລະນະສຸກ | ກົມອານາໄມ ແລະ ສົ່ງເສີມສຸຂະພາບ<br><br>ກະຊວງສາທາລະນະສຸກ | ກົດໝາຍ ວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ສະບັບ ເລກທີ 54/ສພຊ, ລົງວັນທີ 19 ທັນວາ 2014. (ມາດຕາ 25, ວັກທີ 1) | ສ້າງນິຕິກຳເພື່ອຜັນຂະຫຍາຍກົດໝາຍເລກທີ 54/ສພຊ ໂດຍກຳນົດຂັ້ນຕອນ, ເວລາ ແລະ ເອກະສານປະກອບ ພ້ອມທັງຮູບແບບສະຫຼາກ ແລະ ຄຳເຕືອນສຸຂະພາບ ກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ. | ສ້າງນິຕິກຳທີ່ກ່ຽວຂ້ອງ ຄາດວ່າຈະສຳເລັດ ໃນປີ 2020 |
| 30 | **ການອອກໃບອະນຸຍາດນຳເຂົ້າ - ສານເຄມີທີ່ທຳລາຍຊັ້ນໂອໂຊນ**<br><br>ການນຳເຂົ້າ ສານເຄມີທີ່ທຳລາຍຊັ້ນໂອໂຊນ (ສານເຮັດຄວາມເຢັນ ຫລື ນ້ຳຢາແອ) ແລະ ອຸປະກອນບັນຈຸ (ເຄື່ອງເຮັດຄວາມເຢັນ ແລະ ແອເຢັນ) ຕ້ອງຂໍອະນຸຍາດ ຫຼື ຢັ້ງຢືນການນຳເຂົ້າ ຈາກກົມຄວບຄຸມມົນລະພິດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. | ກົມຄວບຄຸມມົນລະພິດ<br><br>ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງ ສານເຄມີ ທີ່ທຳລາຍຊັ້ນໂອໂຊນ ເລກທີ 7858/ກຊສ. (ມາດຕາ 9 ຂໍ້ 1) | ສ້າງລະບຽບການ ກ່ຽວກັບຂັ້ນຕອນ, ເວລາ ແລະ ເອກະສານປະກອບສຳລັບການອອກອະນຸຍາດ ຫຼື ຢັ້ງຢືນ ການນຳເຂົ້າ. ພ້ອມທັງປັບປຸງຊື່ຈາກສານເຄມີທີ່ທຳລາຍຊັ້ນໂອໂຊນ ມາເປັນ "ສານເຄມີພາຍໃຕ້ອະນຸສັນຍາມົງຣີອານ" ທີ່ປະກອບມີບັນຊີລາຍການສານເຄມີທີ່ທຳລາຍ ແລະ ບໍ່ທຳລາຍ ຊັ້ນໂອໂຊນ. | ສ້າງລະບຽບການ ຄາດວ່າຈະສຳເລັດ ໃນປີ 2020 |
| 31 | **ການອອກໃບຢັ້ງຢືນຄຸນນະພາບນຳເຂົ້າ - ວັດສະດຸກໍ່ສ້າງ**<br><br>ການນຳເຂົ້າວັດສະດຸກໍ່ສ້າງ ຕ້ອງໄດ້ຮັບການຢັ້ງຢືນຄຸນນະພາບ ຈາກກົມມາດຕະຖານ ແລະ ວັດແທກ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ. | ກົມມາດຕະຖານ ແລະ ວັດແທກ<br><br>ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ | ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຄຸນນະພາບ ຂອງຜະລິດຕະພັນວັດສະດຸກໍ່ສ້າງ ຢູ່ ສປປ ລາວ ສະບັບເລກທີ 0307/ກວຕ, ລົງວັນທີ 01 ມີນາ 2018. (ມາດຕາ 13)<br><br>ຂໍ້ຕົກລົງ ວ່າດ້ວຍການກວດກາຄຸນນະພາບ ເລກທີ 1226/ສນຍ-ອວຕຊ, ລົງວັນທີ 17 ກໍລະກົດ 2009. (ມາດຕາ 13) | ປັບປຸງ 02 ນິຕິກຳດັ່ງກ່າວ ແນໃສ່ປັບປຸງອາຍຸຂອງໃບຢັ້ງຢືນຄຸນນະພາບ ເປັນ 01 ປີ ຕໍ່ຄັ້ງ. ພ້ອມທັງກຳນົດຂັ້ນຕອນ, ເວລາ ແລະ ເອກະສານປະກອບໃນການອອກໃບຢັ້ງຢືນດັ່ງກ່າວ ແລະ ການແບ່ງຄວາມຮັບຜິດຊອບລະຫວ່າງຂັ້ນສູນກາງ ແລະ ແຂວງ. ການກວດສອບຄຸນນະພາບ ແມ່ນຈະດຳເນີນຢູ່ປາຍທາງ (ຕົວແທນຈຳໜ່າຍ ແລະ ຮ້ານຄ້າທົ່ວໄປ). | ປັບປຸງນິຕິກຳ ຄາດວ່າຈະສຳເລັດໃນປີ 2020 |

| ລ/ດ | ມາດຕະການ | ຂະແໜງການ | ນິຕິກຳ | ການປັບປຸງ | ໝາຍເຫດ |
|---|---|---|---|---|---|
| 32 | **ການອອກໃບຢັ້ງຢືນຄຸນນະພາບນຳເຂົ້າ - ອຸປະກອນເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕຣນິກ**<br><br>ການນຳເຂົ້າອຸປະກອນເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕຣນິກນຳເຂົ້າ ຕ້ອງໄດ້ຮັບການຢັ້ງຢືນຄຸນນະພາບ ຈາກກົມມາດຕະຖານ ແລະ ວັດແທກ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ | ກົມມາດຕະຖານ ແລະ ວັດແທກ<br><br>ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ | ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງຄວາມປອດໄພຂອງອຸປະກອນເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕຣນິກ ຢູ່ ສປປ ລາວ ສະບັບເລກທີ 0058/ກວຕ, ລົງວັນທີ 12 ມັງກອນ 2018. (ມາດຕາ 8, 9, 12 ແລະ 16)<br><br>ຂໍ້ຕົກລົງ ວ່າດ້ວຍການກວດກາຄຸນນະພາບ ເລກທີ 1226/ສນຍ-ອວຕຊ, ລົງວັນທີ 17 ກໍລະກົດ 2009. (ມາດຕາ 13) | ປັບປຸງ 02 ນິຕິກຳດັ່ງກ່າວ ແນໃສ່ປັບປຸງອາຍຸຂອງໃບຢັ້ງຢືນຄຸນນະພາບ ເປັນ 01 ປີ ຕໍ່ຄັ້ງ. ພ້ອມທັງກຳນົດຂັ້ນຕອນ, ເວລາ ແລະ ເອກະສານປະກອບໃນການອອກໃບຢັ້ງຢືນດັ່ງກ່າວ ແລະ ການແບ່ງຄວາມຮັບຜິດຊອບລະຫວ່າງຂັ້ນສູນກາງ ແລະ ແຂວງ. ການກວດສອບຄຸນນະພາບ ແມ່ນຈະດຳເນີນຢູ່ປາຍທາງ (ຕົວແທນຈຳໜ່າຍ ແລະ ຮ້ານຄ້າທົ່ວໄປ). | ປັບປຸງນິຕິກຳ ຄາດວ່າຈະສຳເລັດໃນປີ 2020 |
| 33 | **ການອອກໃບຢັ້ງຢືນຄຸນນະພາບນຳເຂົ້າ - ນ້ຳມັນເຊື້ອໄຟ**<br><br>ການນຳເຂົ້ານ້ຳມັນເຊື້ອໄຟ ຕ້ອງໄດ້ຮັບການຢັ້ງຢືນຄຸນນະພາບ ຈາກກົມມາດຕະຖານ ແລະ ວັດແທກ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ | ກົມມາດຕະຖານ ແລະ ວັດແທກ<br><br>ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ | ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຄຸນນະພາບນ້ຳມັນເຊື້ອໄຟ ເລກທີ 0541/ກວຕ, ລົງວັນທີ 08 ມິຖຸນາ 2016. (ມາດຕາ 15)<br><br>ຂໍ້ຕົກລົງ ວ່າດ້ວຍການກວດກາຄຸນນະພາບ ເລກທີ 1226/ສນຍ-ອວຕຊ, ລົງວັນທີ 17 ກໍລະກົດ 2009. (ມາດຕາ 13) | ປັບປຸງຂັ້ນຕອນການກວດສອບຄຸນນະພາບນ້ຳມັນເຊື້ອໄຟ ໃຫ້ວ່ອງໄວຂຶ້ນກວ່າເກົ່າ. ນອກຈາກນັ້ນ, ຍັງຈະໄດ້ມີການດຳເນີນການກວດສອບຄຸນນະພາບນ້ຳມັນເຄື່ອງຢູ່ປາຍທາງ (ຕົວແທນ ຈຳໜ່າຍ ແລະ ຮ້ານຄ້າທົ່ວໄປ). | ປັບປຸງນິຕິກຳ ຄາດວ່າຈະສຳເລັດໃນປີ 2020 |
| 34 | **ການອອກໃບອະນຸຍາດນຳເຂົ້າ - ເຄມີ**<br><br>ການນຳເຂົ້າເຄມີ ຕ້ອງແມ່ນແບບລວມສູນ ໂດຍແມ່ນກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຮັບຜິດຊອບ. ຖ້າເປັນເຄມີພາຍໃຕ້ການຄຸ້ມຄອງຂອງຂະແໜງການອື່ນຕ້ອງໄດ້ຮັບການຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງກ່ອນ. | ກົມອຸດສາຫະກຳ ແລະ ຫັດຖະກຳ<br><br>ກະຊວງອຸດສາຫະກຳ ແລະ ການຄ້າ | ກົດໝາຍ ວ່າດ້ວຍການຄຸ້ມຄອງເຄມີ ເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016. (ມາດຕາ 45 ແລະ ມາດຕາ 64)<br><br>ຂໍ້ຕົກລົງ ວ່າດ້ວຍບັນຊີເຄມີ ເລກທີ 0389/ອຄ.ກອຫ, ລົງວັນທີ 03 ເມສາ 2018. | ສ້າງລະບຽບການ ເພື່ອຜັນຂະຫຍາຍກົດໝາຍ ວ່າດ້ວຍການຄຸ້ມຄອງເຄມີ 07/ສພຊ ເປັນຕົ້ນ ຂໍ້ຕົກລົງວ່າດ້ວຍການຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ເຄມີ.<br><br>ສັງລວມບັນດາບັນຊີທາດເຄມີທີ່ຂະແໜງການຮັບຜິດຊອບເພື່ອສັງລວມເຂົ້າເປັນບັນຊີເຄມີແຫ່ງຊາດ. | ສ້າງລະບຽບການ ແລະ ບັນຊີແຫ່ງຊາດໃນປີ 2020 |
| 35 | **ການອອກໃບອະນຸຍາດສົ່ງອອກ – ເຄມີ**<br><br>ການສົ່ງອອກເຄມີ ຕ້ອງແມ່ນແບບລວມສູນ ໂດຍແມ່ນກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຮັບຜິດຊອບ. ຖ້າເປັນເຄມີພາຍໃຕ້ການຄຸ້ມຄອງຂອງຂະແໜງການອື່ນຕ້ອງໄດ້ຮັບການຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງກ່ອນ. | ກົມອຸດສາຫະກຳ ແລະ ຫັດຖະກຳ<br><br>ກະຊວງອຸດສາຫະກຳ ແລະ ການຄ້າ | ກົດໝາຍ ວ່າດ້ວຍການຄຸ້ມຄອງເຄມີ ເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016. (ມາດຕາ 45 ແລະ ມາດຕາ 64)<br><br>ຂໍ້ຕົກລົງ ວ່າດ້ວຍບັນຊີເຄມີ ເລກທີ 0389/ອຄ.ກອຫ, ລົງວັນທີ 03 ເມສາ 2018. | ສ້າງລະບຽບການ ເພື່ອຜັນຂະຫຍາຍກົດໝາຍ ວ່າດ້ວຍການຄຸ້ມຄອງເຄມີ 07/ສພຊ ເປັນຕົ້ນ ຂໍ້ຕົກລົງວ່າດ້ວຍການຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ເຄມີ.<br><br>ສັງລວມບັນດາບັນຊີທາດເຄມີທີ່ຂະແໜງການຮັບຜິດຊອບເພື່ອສັງລວມເຂົ້າເປັນບັນຊີເຄມີແຫ່ງຊາດ. | ສ້າງລະບຽບການ ແລະ ບັນຊີແຫ່ງຊາດໃນປີ 2020 |



ຽ

| ລ/ດ | ມາດຕະການ | ຂະແໜງການ | ນິຕິກຳ | ການປັບປຸງ | ໝາຍເຫດ |
|---|---|---|---|---|---|
| 36 | **ການອອກໃບອະນຸຍາດດ້ານເຕັກນິກນຳເຂົ້າ - ຍານພາຫະນະ**<br>ການນຳເຂົ້າຍານພາຫະນະ ທີ່ມານຳໃຊ້ໃນ ສປປ ລາວ ຕ້ອງໄດ້ຮັບການອະນຸຍາດດ້ານເຕັກນິກຈາກ ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ. | ກົມຂົນສົ່ງ<br>ກະຊວງໂຍທາທິການ ແລະ ຂົນສົ່ງ | ຂໍ້ກຳນົດ ກ່ຽວກັບ ມາດຕະຖານເຕັກນິກ ຍານພາຫະນະ ແລະ ສິ້ນສ່ວນ ຂອງຍານພາຫະນະ ທີ່ຈະໄດ້ຮັບອະນຸຍາດ ໃຫ້ນຳເຂົ້າມາຂຶ້ນທະບຽນ ແລະ ປະກອບເປັນຄັນ ເພື່ອນຳໃຊ້ໃນ ສປປ ລາວ ເລກທີ 4312/ຄຂປກ. (ມາດຕາ 6 ແລະ 7) | ສ້າງກົດໝາຍ ວ່າດ້ວຍຍານພາຫະນະ ໃຫ້ສອດຄ່ອງກັບສະພາບການຕົວຈິງ ແລະ ທັງເປັນການຜັນຂະຫຍາຍຂໍ້ຕົກລົງ ວ່າດ້ວຍການຮັບຮູ້ເຊິ່ງກັນ ແລະ ກັນ ໃນກອບຂອງວຽກງານຊິ້ນສ່ວນຍານພາຫະນະອາຊຽນ (ASEAN MRA). | ສ້າງກົດໝາຍ ຄາດວ່າຈະສຳເລັດ ໃນປີ 2020 |
| 37 | **ການອອກໃບອະນຸຍາດດ້ານເຕັກນິກນຳເຂົ້າ - ຊິ້ນສ່ວນຍານພາຫະນະ**<br>ຊິ້ນສ່ວນພາຫະນະນຳເຂົ້າມາປະກອບ ຫຼື ຜະລິດ ຢູ່ໂຮງງານພາຍປະເທດ ຕ້ອງໄດ້ຮັບການອະນຸຍາດທາງດ້ານເຕັກນິກຈາກກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ. | ກົມຂົນສົ່ງ<br>ກະຊວງໂຍທາທິການ ແລະ ຂົນສົ່ງ | ຂໍ້ກຳນົດ ກ່ຽວກັບ ມາດຕະຖານເຕັກນິກ ຍານພາຫະນະ ແລະ ສິ້ນສ່ວນ ຂອງຍານພາຫະນະ ທີ່ຈະໄດ້ຮັບອະນຸຍາດ ໃຫ້ນຳເຂົ້າມາຂຶ້ນທະບຽນ ແລະ ປະກອບເປັນຄັນ ເພື່ອນຳໃຊ້ໃນ ສປປ ລາວ ເລກທີ 4312/ຄຂປກ. (ມາດຕາ 6 ແລະ 7) | ສ້າງກົດໝາຍ ວ່າດ້ວຍຍານພາຫະນະ ໃຫ້ສອດຄ່ອງກັບສະພາບການຕົວຈິງ ແລະ ທັງເປັນການຜັນຂະຫຍາຍຂໍ້ຕົກລົງ ວ່າດ້ວຍການຮັບຮູ້ເຊິ່ງກັນ ແລະ ກັນ ໃນກອບຂອງວຽກງານຊິ້ນສ່ວນຍານພາຫະນະອາຊຽນ (ASEAN MRA). | ສ້າງກົດໝາຍ ຄາດວ່າຈະສຳເລັດ ໃນປີ 2020 |
| 38 | **ການອອກໜັງສືຢັ້ງຢືນສິດທິພິເສດດ້ານອັດຕາພາສີ - ສິນຄ້ານຳເຂົ້າ**<br>ສິນຄ້ານຳເຂົ້າ ທີ່ຕ້ອງການໄດ້ຮັບສິດທິພິເສດທາງດ້ານອັດຕາພາສີ ຕ້ອງຍື່ນສະເໜີຕໍ່ກົມພາສີ (ພະແນກນິຕິກຳ), ກະຊວງການເງິນ ເພື່ອຄົ້ນຄວ້າ, ຄຸ້ມຄອງກວດກາ ແລະ ອອກໜັງສືຢັ້ງຢືນສິດພິເສດດ້ານອັດຕາພາສີ. | ກົມພາສີ<br>ກະຊວງການເງິນ | ຄຳແນະນຳ ກ່ຽວກັບແຫຼ່ງກຳເນີດສິນຄ້າ ແລະ ການໃຫ້ສິດທິພິເສດດ້ານອັດຕາພາສີ ຕາມເງື່ອນໄຂຂອງບັນດາສັນຍາການຄ້າເສລີຕ່າງໆ ທີ່ ສປປ ລາວ ເຂົ້າເປັນພາຄີ ເລກທີ 3782/ກພສ, ລົງວັນທີ 16 ກຸມພາ 2016. (ຂໍ້ 3)<br>ດຳລັດ ວ່າດ້ວຍແຫຼ່ງກຳເນີດສິນຄ້າ ນຳເຂົ້າ ແລະ ສົ່ງອອກ ເລກທີ 228/ນຍ, ລົງວັນທີ 22 ເມສາ 2010. (ມາດຕາ 13, 14 ແລະ 19) | ສ້າງນິຕິກຳສະເພາະ ເພື່ອຜັນຂະຫຍາຍ ແລະ ຮອງຮັບການນຳໃຊ້ລະບົບການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບເອເລັກໂຕນິກ ໃນຂອບອາຊຽນ (ຟອມ D). | ສ້າງນິຕິກຳ ຄາດວ່າຈະສຳເລັດໃນປີ 2020 |
| 39 | **ການອອກອະນຸມັດຮັບຮອງ - ແຜນນຳເຂົ້າສິນຄ້າເຄື່ອງຂອງເພື່ອມາຮັບໃຊ້ໂຄງການກູ້ຢືມ ແລະ ຊ່ວຍເຫຼືອລ້າ**<br>ການນຳເຂົ້າສິນຄ້າເຄື່ອງຂອງເພື່ອມາຮັບໃຊ້ໂຄງການກູ້ຢືມ ແລະ ຊ່ວຍເຫຼືອລ້າ ຈາກຕ່າງປະເທດ ທີ່ໄດ້ຮັບນະໂຍບາຍດ້ານພາສີ ແລະ ອາກອນ ໃຫ້ກະທັດຮັດຂຶ້ນ ຕ້ອງໄດ້ຮັບການອະນຸມັດຮັບຮອງແຜນນຳເຂົ້າ ຈາກກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ ໂດຍຜ່ານການຢັ້ງຢືນຮັບຮອງທາງດ້ານເຕັກນິກ ຂອງຂະແໜງການທີ່ກ່ຽວຂ້ອງ. | ກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ<br>ກະຊວງການເງິນ | ແຈ້ງການ ກ່ຽວກັບ ຂັ້ນຕອນການດຳເນີນເອກະສານຂໍອະນຸມັດນຳເຂົ້າສິນຄ້າເຄື່ອງຂອງ ແລະ ຍົກເວັ້ນພາສີ-ອາກອນນຳເຂົ້າສຳລັບໂຄງການທີ່ນຳໃຊ້ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດ ເລກທີ 0420/ກງ, ລົງວັນທີ 14 ກຸມພາ 2018. (ຂໍ້ 1, ກ)<br>ຄຳແນະນຳ ວ່າດ້ວຍ ການຈັດຕັ້ງປະຕິບັດນະໂຍບາຍພາສີ-ອາກອນ ສຳລັບການນຳເຂົ້າວັດຖຸ, ອຸປະກອນ ແລະ ພາຫະນະຕ່າງໆ ຂອງແຜນງານ/ໂຄງການ ທີ່ນຳໃຊ້ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດ ເລກທີ 2560/ກງ, ລົງວັນທີ 09 ສິງຫາ 2016.(ຂໍ້ 3 ແລະ 4) | ປັບປຸງຄຳແນະນຳ 2560/ກງ ເພື່ອກຳນົດບັນດາຂັ້ນຕອນ, ເວລາ ແລະ ເອກະສານປະກອບ ສຳລັບການຢັ້ງຢືນທາງດ້ານເຕັກນິກ ຂອງຂະແໜງການທີ່ກ່ຽວຂ້ອງ ແລະ ການອະນຸມັດຮັບຮອງຂອງຂະແໜງການເງິນ. | ປັບປຸງຄຳແນະນຳ ສຳເລັດ ໃນປີ 2020-2021 |



ð

| ລ/ດ | ມາດຕະການ | ຂະແໜງການ | ນິຕິກຳ | ການປັບປຸງ | ໝາຍເຫດ |
|---|---|---|---|---|---|
| 40 | **ການອອກໃບອະນຸຍາດເຄື່ອນຍ້າຍພາຍໃນ - ຜະລິດຕະພັນຖ່ານຂາວ**<br>ການເຄື່ອນຍ້າຍຜະລິດຕະພັນຖ່ານຂາວ ພາຍໃນ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງກະສິກຳ ແລະ ປ່າໄມ້ ຄື:<br>- ການເຄື່ອນຍ້າຍພາຍໃນແຂວງ (ເມືອງຕໍ່ເມືອງ) ແມ່ນໃຫ້ຍື່ນຄຳຮ້ອງຕໍ່ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ.<br>- ການເຄື່ອນຍ້າຍລະຫວ່າງແຂວງ ແມ່ນໃຫ້ຍື່ນຄຳຮ້ອງຕໍ່ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ. | ກົມປ່າໄມ້<br>ກະຊວງກະສິກຳ ແລະ ປ່າໄມ້ | ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019. (ມາດຕາ 95)<br>ຄຳແນະນຳ ກ່ຽວກັບການຂຸດຄົ້ນໄມ້ ແລະ ເຄື່ອນຍ້າຍໄມ້ຕໍ້, ການເຄື່ອນຍ້າຍຖ່ານຂາວ ທີ່ຜະລິດມາຈາກໄມ້ຕໍ້ ພາຍໃນ ແລະ ສົ່ງອອກຕ່າງປະເທດ ເລກທີ 0050/ກປ, ລົງວັນທີ 18 ກັນຍາ 2017. (ຂໍ້ 3.1) | ສ້າງລະບຽບການ ເພື່ອປັບປຸງຂັ້ນຕອນ, ແບບຟອມ ແລະ ເອກະສານປະກອບ ການເຄື່ອນຍ້າຍ ຢູ່ຂັ້ນເມືອງ ແລະ ແຂວງ ໃຫ້ກະທັດຮັດຂຶ້ນ ໂດຍສະເພາະການຫຼຸດຂັ້ນຕອນ, ແບບຟອມ ຫຼື ເອກະສານ ທີ່ຊ້ຳຊ້ອນກັນ ລະຫວ່າງຂັ້ນເມືອງ ແລະ ແຂວງ ຄື: ການເຄື່ອນຍ້າຍລະຫວ່າງເມືອງ ຕໍ່ ເມືອງ ແລະ ແຂວງ ຕໍ່ ແຂວງ ແມ່ນໃຫ້ຂັ້ນເມືອງ ຫຼື ແຂວງ ເປັນຜູ້ຢັ້ງຢືນ ແລະ ອອກອະນຸຍາດເຄື່ອນຍ້າຍ ປ່ອນກຽວເລີຍ. | ສ້າງລະບຽບການ ຄາດວ່າຈະສຳເລັດໃນປີ 2020-2021 |
| 41 | **ການອອກໃບອະນຸຍາດເຄື່ອນຍ້າຍ – ສັດປ່າ ແລະ ພືດປ່າ**<br>ການເຄື່ອນຍ້າຍສັດປ່າ ແລະ ພືດປ່າ ຕ້ອງໄດ້ຮັບອະນຸຍາດເຄື່ອນຍ້າຍ ຈາກຂະແໜງການກະສິກຳ ແລະ ປ່າໄມ້ ຄື:<br>- ຖ້າເຄື່ອນຍ້າຍສັດປ່າ ແລະ ພືດປ່າ ປະເພດ I ລະຫວ່າງແຂວງ ຕໍ່ ແຂວງ ແມ່ນໃຫ້ຍື່ນຄຳຮ້ອງ ຕໍ່ ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້.<br>- ຖ້າເຄື່ອນຍ້າຍສັດປ່າ ແລະ ພືດປ່າ ປະເພດອື່ນ ລະຫວ່າງແຂວງ ຕໍ່ ແຂວງ ແມ່ນໃຫ້ຍື່ນຄຳຮ້ອງ ຕໍ່ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ<br>- ຖ້າເຄື່ອນຍ້າຍພາຍໃນແຂວງ (ເມືອງຕໍ່ເມືອງ) ແມ່ນໃຫ້ຍື່ນຄຳຮ້ອງຕໍ່ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ. | ກົມປ່າໄມ້<br>ກະຊວງກະສິກຳ ແລະ ປ່າໄມ້ | ຂໍ້ຕົກລົງ ວ່າດ້ວຍການສ້າງ ແລະ ຄຸ້ມຄອງ ສວນສັດ, ຟາມສັດປ່າ, ສຸນຟື້ນຟູ ແລະ ຂະຫຍາຍພັນ ສັດປ່າ ແລະ ສວນພືດປ່າ ເລກທີ 0188/ກປ, ລົງວັນທີ 08 ກຸມພາ 2019. (ມາດຕາ 15) | ສ້າງແບບຟອມ ແລະ ເອກະສານ ສຳລັບການຂໍອະນຸຍາດເຄື່ອນຍ້າຍ ໃຫ້ມີຄວາມເປັນເອກະພາບກັນທົ່ວປະເທດ.<br>ປັບປຸງກົດໝາຍ ສັດນ້ຳ ແລະ ສັດປ່າ ເລກທີ 07/ສພຊ ເພື່ອສອດຄ່ອງກັບກົດໝາຍ ການປະມົງ ເລກທີ 03/ສພຊ, ສັນຍາ CITES ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | ແບບຟອມ ຄາດວ່າຈະສຳເລັດໃນປີ 2020<br>ປັບປຸງກົດໝາຍ ສັດນ້ຳ ແລະ ສັດປ່າ ຄາດວ່າຈະສຳເລັດ ໃນປີ 2021-2022 |
| 42 | **ການອອກໃບອະນຸຍາດນຳເຂົ້າ - ສັດປ່າ ແລະ ພືດປ່າ**<br>ການນຳເຂົ້າສັດປ່າ ແລະ ພືດປ່າ ຕາມບັນຊີ II ແລະ III ຂອງ CITES ຕ້ອງໄດ້ຮັບອະນຸຍາດຈາກກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້, | ກົມປ່າໄມ້<br>ກະຊວງກະສິກຳ ແລະ ປ່າໄມ້ | ຂໍ້ຕົກລົງ ວ່າດ້ວຍການສ້າງ ແລະ ຄຸ້ມຄອງ ສວນສັດ, ຟາມສັດປ່າ, ສຸນຟື້ນຟູ ແລະ ຂະຫຍາຍພັນ ສັດປ່າ ແລະ ສວນພືດປ່າ ເລກທີ 0188/ກປ, ລົງວັນທີ 08 ກຸມພາ 2019. (ມາດຕາ 17)<br>ກົດໝາຍ ວ່າດ້ວຍ ສັດນ້ຳ ແລະ ສັດປ່າ ເລກທີ 07/ສພຊ. (ມາດຕາ 42, ຂໍ້ 1) | ປັບປຸງກົດໝາຍ ສັດນ້ຳ ແລະ ສັດປ່າ ເລກທີ 07/ສພຊ ເພື່ອສອດຄ່ອງກັບກົດໝາຍ ການປະມົງ ເລກທີ 03/ສພຊ, ສັນຍາ CITES ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | ປັບປຸງກົດໝາຍ ສັດນ້ຳ ແລະ ສັດປ່າ ຄາດວ່າຈະສຳເລັດ ໃນປີ 2021-2022 |

| ລ/ດ | ມາດຕະການ | ຂະແໜງການ | ນິຕິກຳ | ການປັບປຸງ | ໝາຍເຫດ |
|---|---|---|---|---|---|
| 43 | **ການອອກໃບອະນຸຍາດສົ່ງອອກ - ສັດປ່າ ແລະ ພືດປ່າ**<br><br>ການສົ່ງອອກສັດປ່າ ແລະ ພືດປ່າ ຕາມບັນຊີ II ແລະ III ຂອງ CITES ຕ້ອງໄດ້ຮັບອະນຸຍາດຈາກກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ | ກົມປ່າໄມ້<br><br>ກະຊວງກະສິກຳ ແລະ ປ່າໄມ້ | ຂໍ້ຕົກລົງ ວ່າດ້ວຍການສ້າງ ແລະ ຄຸ້ມຄອງ ສວນສັດ, ຟາມສັດປ່າ, ສູນຟື້ນຟູ ແລະ ຂະຫຍາຍພັນ ສັດປ່າ ແລະ ສວນພືດປ່າ ເລກທີ 0188/ກປ, ລົງວັນທີ 08 ກຸມພາ 2019. (ມາດຕາ 18)<br><br>ກົດໝາຍ ວ່າດ້ວຍ ສັດນ້ຳ ແລະ ສັດປ່າ ເລກທີ 07/ສພຊ. (ມາດຕາ 42, ຂໍ້ 1) | ປັບປຸງກົດໝາຍ ສັດນ້ຳ ແລະ ສັດປ່າ ເລກທີ 07/ສພຊ ເພື່ອສອດຄ່ອງກັບກົດໝາຍ ການປະມົງ ເລກທີ 03/ສພຊ, ສັນຍາ CITES ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | ປັບປຸງກົດໝາຍ ສັດນ້ຳ ແລະ ສັດປ່າ ຄາດວ່າຈະສຳເລັດ ໃນປີ 2021-2022 |
| 44 | **ການອອກໃບອະນຸຍາດນຳເຂົ້າ - ຝຸ່ນ**<br><br>ການນຳເຂົ້າຝຸ່ນ ຕ້ອງໄດ້ຮັບອະນຸຍາດນຳເຂົ້າ ຈາກພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ. | ກົມປູກຝັງ<br><br>ກະຊວງກະສິກຳ ແລະ ປ່າໄມ້ | ຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍ ການຄຸ້ມຄອງຝຸ່ນ ໃນ ສປປ ລາວ ເລກທີ 2169/ກປ, ລົງວັນທີ 24 ຕຸລາ 2013. (ມາດຕາ 23, 24, 26 ແລະ 27) | ປັບປຸງຂໍ້ຕົກລົງ 2169/ກປ ເປັນດຳລັດ ຫຼື ກົດໝາຍ ໂດຍກຳນົດເງື່ອນໄຂ, ຂັ້ນຕອນ, ເວລາ ແລະ ເອກະສານປະກອບ ໃນການຂຶ້ນທະບຽນ ແລະ ອອກອະນຸຍາດ ຢ່າງລະອຽດ ພ້ອມທັງ ການແບ່ງຂັ້ນຄຸ້ມຄອງລະຫວ່າງຂັ້ນສູນກາງ ແລະ ທ້ອງຖິ່ນ . | ປັບປຸງຂໍ້ຕົກລົງທີ່ກ່ຽວຂ້ອງ ຄາດວ່າຈະສຳເລັດໃນປີ 2022 |
| 45 | **ການອອກໃບອະນຸຍາດນຳເຂົ້າ - ຢາປາບສັດຕູພືດອັນຕະລາຍປານກາງ**<br><br>ຢາປາບສັດຕູພືດອັນຕະລາຍປານກາງ ຕ້ອງຂໍອະນຸຍາດນຳເຂົ້າ ກັບ ຂະແໜງການກະສິກຳ ແລະ ປ່າໄມ້ ບົນພື້ນຖານທີ່ໄດ້ຂຶ້ນທະບຽນວິຊາການ ຢາປາບສັດຕູພືດຕາມລະບຽບທີ່ກ່ຽວຂ້ອງ ຢ່າງຖືກຕ້ອງ. | ກົມປູກຝັງ<br><br>ກະຊວງກະສິກຳ ແລະ ປ່າໄມ້ | ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ເລກທີ 258/ລບ, ລົງວັນທີ 24 ສິງຫາ 2017. (ມາດຕາ 11) | ສ້າງລະບຽບການພັນຂະຫຍາຍດຳລັດ 258/ລບ ເພື່ອກຳນົດ ຂັ້ນຕອນ, ເວລາ, ແບບຟອມ ແລະ ເອກະສານປະກອບ ສຳລັບການອອກອະນຸຍາດນຳເຂົ້າ ພ້ອມທັງແບ່ງຂັ້ນຄຸ້ມຄອງລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ຢ່າງຊັດເຈນ. | ສ້າງລະບຽບການພັນຂະຫຍາຍ ຄາດວ່າຈະສຳເລັດ ໃນປີ 2022 |
| 46 | **ການອອກໃບອະນຸຍາດນຳເຂົ້າ - ຢາປາບສັດຕູພືດອັນຕະລາຍໜ້ອຍ**<br><br>ຢາປາບສັດຕູພືດອັນຕະລາຍໜ້ອຍ ຕ້ອງຂໍອະນຸຍາດນຳເຂົ້າ ກັບ ຂະແໜງການກະສິກຳ ແລະ ປ່າໄມ້ ບົນພື້ນຖານທີ່ໄດ້ຂຶ້ນທະບຽນວິຊາການ ຢາປາບສັດຕູພືດຕາມລະບຽບທີ່ກ່ຽວຂ້ອງ ຢ່າງຖືກຕ້ອງ. | ກົມປູກຝັງ<br><br>ກະຊວງກະສິກຳ ແລະ ປ່າໄມ້ | ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ເລກທີ 258/ລບ, ລົງວັນທີ 24 ສິງຫາ 2017. (ມາດຕາ 12) | ສ້າງລະບຽບການພັນຂະຫຍາຍດຳລັດ 258/ລບ ເພື່ອກຳນົດ ຂັ້ນຕອນ, ເວລາ, ແບບຟອມ ແລະ ເອກະສານປະກອບ ສຳລັບການອອກອະນຸຍາດນຳເຂົ້າ ພ້ອມທັງແບ່ງຂັ້ນຄຸ້ມຄອງລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ຢ່າງຊັດເຈນ. | ສ້າງລະບຽບການພັນຂະຫຍາຍ ຄາດວ່າຈະສຳເລັດ ໃນປີ 2022 |

| ລ/ດ | ມາດຕະການ | ຂະແໜງການ | ນິຕິກຳ | ການປັບປຸງ | ໝາຍເຫດ |
|---|---|---|---|---|---|
| 47 | **ການອອກໃບອະນຸຍາດນຳເຂົ້າ - ຢາປາບສັດຕູພືດອັນຕະລາຍບໍ່ເປັນພິດກະທັນຫັນ**<br><br>ຢາປາບສັດຕູພືດອັນຕະລາຍບໍ່ເປັນພິດກະທັນຫັນ ຕ້ອງຂໍອະນຸຍາດນຳເຂົ້າ ກັບ ຂະແໜງການກະສິກຳ ແລະ ປ່າໄມ້ ຍົກເວັ້ນຢາປາບສັດຕູພືດຊີວະພາບ ທີ່ມີຄວາມປອດໄພຕໍ່ສຸຂະພາບ ຂອງຄົນ, ສັດ ແລະ ສິ່ງແວດລ້ອມ ຊຶ່ງບໍ່ໄດ້ບັນຈຸໃສ່ພາຊະນະເພື່ອຈຳໜ່າຍ. | ກົມປູກຝັງ<br><br>ກະຊວງກະສິກຳ ແລະ ປ່າໄມ້ | ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ເລກທີ 258/ລບ, ລົງວັນທີ 24 ສິງຫາ 2017. (ມາດຕາ 13) | ສ້າງລະບຽບການຜັນຂະຫຍາຍດຳລັດ 258/ລບ ເພື່ອກຳນົດ ຂັ້ນຕອນ, ເວລາ, ແບບຟອມ ແລະ ເອກະສານປະກອບ ສຳລັບການອອກອະນຸຍາດນຳເຂົ້າ ພ້ອມທັງແບ່ງຂັ້ນຄຸ້ມຄອງລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ຢ່າງຊັດເຈນ. | ສ້າງລະບຽບການຜັນຂະຫຍາຍ ຄາດວ່າຈະສຳເລັດ ໃນປີ 2022 |
| 48 | **ການອອກໃບອະນຸຍາດສົ່ງອອກ - ຊັບພະຍາກອນທຳມະຊາດທີ່ເປັນຢາ**<br><br>ການສົ່ງອອກຊັບພະຍາກອນທຳມະຊາດທີ່ເປັນຢາ, ຕ້ອງໄດ້ຮັບການປຸງແຕ່ງເປັນຜະລິດຕະພັນເຄິ່ງສຳເລັດຮູບ ຫຼື ສຳເລັດຮູບເສຍກ່ອນ ຈຶ່ງສົ່ງອອກໄດ້ ແລະ ຕ້ອງໄດ້ຮັບອະນຸຍາດສົ່ງອອກຈາກກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ. | ກົມອາຫານ ແລະ ຢາ<br><br>ກະຊວງສາທາລະນະສຸກ | ຄຳສັ່ງແນະນຳ ວ່າດ້ວຍ ການຈັດຕັ້ງປະຕິບັດ ດຳລັດຂອງ ນາຍົກລັດຖະມົນຕີ ກ່ຽວກັບ ຊັບພະຍາກອນ ທຳມະຊາດ ທີ່ເປັນຢາ ເລກທີ 252/ກຊສ. (ຂໍ້ທີ 4)<br><br>ດຳລັດ ວ່າດ້ວຍ ຊັບພະຍາກອນທຳມະຊາດ ທີ່ເປັນຢາ (ເພລັກຊັບພະຍາກອນທຳມະຊາດ) ເລກທີ 155/ນຍ. (ມາດຕາ 10, ຂໍ້ 7)<br><br>ແຈ້ງການ ຂອງຫ້ອງວ່າການສູນກາງ ພັກ ກ່ຽວກັບຄຸ້ມຄອງປົກປັກຮັກສາ ແລະ ການອະນຸຍາດຂຸດຄົ້ນ ເກັບຊື້ ສົ່ງ ອອກ ຊັບພະຍາກອນທຳມະຊາດທີ່ ເປັນຢາ ໃນຂອບເຂດທົ່ວປະເທດ ເລກທີ 251/ຫສພ, ລົງວັນທີ 12 ກໍລະກົດ 2018. (ວັກ 1) | ຍົກດຳລັດ 155/ນຍ ເປັນກົດໝາຍ ແລະ ສ້າງຂໍ້ຕົກລົງສະເພາະເພື່ອຜັນຂະຫຍາຍເພື່ອໃຫ້ຣັດກຸມກວ່າ ໂດຍສະເພາະ ຂັ້ນຕອນ, ເວລາ, ແບບຟອມ ແລະ ເອກະສານປະກອບ ພ້ອມທັງກຳນົດແຈ້ງລາຍການຊັບພະຍາກອນທຳມະຊາດທີ່ເປັນຢາ ທີ່ຫ້າມສົ່ງອອກ, ທີ່ຕ້ອງຂໍອະນຸຍາດ ແລະ ການແບ່ງຂັ້ນຄຸ້ມຄອງ ຄັກແນ່ ລະຫວ່າງລັດຖະບານ ແລະ ຂະແໜງການທີ່ກ່ຽວຂ້ອງ. | ສ້າງ ແລະ ປັບປຸງນິຕິກຳທີ່ກ່ຽວຂ້ອງ ແລະ ບັນຊີຊັບພະຍາກອນທຳມະຊາດທີ່ເປັນຢາ ຄາດວ່າຈະສຳເລັດໃນປີ 2022 |
| 49 | **ການອອກໃບອະນຸຍາດນຳເຂົ້າ - ຜະລິດຕະພັນການແພດ**<br><br>ການນຳເຂົ້າຜະລິດຕະພັນການແພດ ຕ້ອງໄດ້ຮັບອະນຸຍາດນຳເຂົ້າ ຈາກກົມອາຫານ ແລະ ຢາ, ກະຊວງ ສາທາລະນະສຸກ. | ກົມອາຫານ ແລະ ຢາ<br><br>ກະຊວງສາທາລະນະສຸກ | ກົດໝາຍ ວ່າດ້ວຍ ຢາ ແລະ ຜະລິດຕະພັນການແພດ ເລກທີ 07/ສພຊ. (ບໍ່ມີມາດຕາທີ່ລະບຸຊັດເຈນ ກ່ຽວກັບການອອກໃບອະນຸຍາດນຳເຂົ້າ, ເພາະມາດຕາ 16 ວັກ 2 ກຳນົດໃຫ້ມີການກວດກາ) | ສ້າງລະບຽບການຜັນຂະຫຍາຍ ກົດໝາຍ 07/ສພຊ ໂດຍກຳນົດຂັ້ນຕອນ, ເວລາ ແລະ ເອກະສານປະກອບ ພ້ອມທັງການແບ່ງຂັ້ນຄຸ້ມຄອງອອກອະນຸຍາດນຳເຂົ້າ ລະຫວ່າງກົມທີ່ກ່ຽວຂ້ອງພາຍໃນກະຊວງ. | ສ້າງນິຕິກຳທີ່ກ່ຽວຂ້ອງ ຄາດວ່າຈະສຳເລັດ ໃນປີ 2022 |

| ລ/ດ | ມາດຕະການ | ຂະແໜງການ | ນິຕິກຳ | ການປັບປຸງ | ໝາຍເຫດ |
| --- | --- | --- | --- | --- | --- |
| 50 | **ການອອກໃບອະນຸຍາດນຳເຂົ້າ - ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ**<br><br>ການນຳເຂົ້າແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຕ້ອງໄດ້ຮັບອະນຸຍາດນຳເຂົ້າ ຈາກກົມຄຸ້ມຄອງບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່. | ກົມຄຸ້ມຄອງບໍ່ແຮ່<br><br>ກະຊວງພະລັງງານ ແລະ ບໍ່ແຮ່ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດ ນຳເຂົ້າ ແລະ ສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ເລກທີ 0352/ພບ, ລົງວັນທີ 13 ມີນາ 2012. (ມາດຕາ 5)<br><br>ແຈ້ງການ ກ່ຽວກັບຂັ້ນຕອນການສະເໜີແຜນການຈຳໜ່າຍ ແລະ ການຈຳໜ່າຍ ຜະລິດຕະພັນແຮ່ທາດ ເລກທີ 0011/ກຄຣ3, ລົງວັນທີ 04 ມັງກອນ 2019.<br>(ຂໍ້ III, 1) | ປັບປຸງບາງມາດຕາ ກົດໝາຍ ບໍ່ແຮ່ (ສະບັບປັບປຸງ) ເລກທີ 31/ສພຊ, ລົງວັນທີ 03 ພະຈິກ 2017. ຫຼັງຈາກນັ້ນ, ປັບປຸງບັນດານິຕິກຳລຸ່ມກົດໝາຍ ເຂົ້າເປັນອັນດຽວ ເຊັ່ນ:<br>- ດຳລັດ ວ່າດ້ວຍການສົ່ງອອກຜະລິດຕະພັນແຮ່ທາດ ເລກທີ 90/ນຍ, ລົງວັນທີ 09 ມິຖຸນາ 2008;<br>- ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດ ນຳເຂົ້າ ແລະ ສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ເລກທີ 0352/ພບ, ລົງວັນທີ 13 ມີນາ 2012;<br>- ຂໍ້ຕົກລົງ ວ່າດ້ວຍການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ເລກທີ 0481/ພບ, ລົງວັນທີ 20 ເມສາ 2012;<br>- ແຈ້ງການ ກ່ຽວກັບຂັ້ນຕອນການສະເໜີແຜນການຈຳ ໜ່າຍ ແລະ ການຈຳໜ່າຍ ຜະລິດຕະພັນແຮ່ທາດ ເລກທີ 0011/ກຄຣ3, ລົງວັນທີ 04 ມັງກອນ 2019.<br><br>ໂດຍກຳນົດຂັ້ນຕອນ, ເວລາ, ແບບຟອມ ແລະ ເອກະສານປະກອບ ໃນການອອກອະນຸຍາດ ຢ່າງລະອຽດ; ປັບປຸງຂອດການແຕ່ງຕັ້ງຄະນະກຳມະການ ຕາງໜ້າຈາກຂະແໜງ ການທີ່ກ່ຽວຂ້ອງ ເພື່ອລົງກວດກາ, ໜີບກົ່ວຕູ້ສິນຄ້າ, ເຊັນບົດບັນທຶກຮ່ວມກັນ ແລະ ຢັ້ງຢືນການສົ່ງອອກຕົວຈິງ ໃຫ້ກະທັດຮັດ ແລະ ເປັນເອກະພາບກັນ; ການແບ່ງການຄຸ້ມຄອງ ລະຫວ່າງຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ຊັດເຈນ. | ສ້າງ ແລະ ປັບປຸງນິຕິກຳທັງໝົດ ຄາດວ່າຈະສຳເລັດໃນປີ 2022 |
| 51 | **ການອອກໃບອະນຸຍາດສົ່ງອອກ - ຜະລິດຕະພັນແຮ່ທາດ**<br><br>ການສົ່ງອອກ ຜະລິດຕະພັນແຮ່ທາດ ຕ້ອງໄດ້ຮັບອະນຸຍາດສົ່ງອອກ ຈາກກົມຄຸ້ມຄອງບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່ | | | | |

<u>ໝາຍເຫດ</u>: ລາຍລະອຽດຂອງການປັບປຸງຂັ້ນຕອນ, ເວລາ ແລະ ເອກະສານປະກອບ ໃນການອອກອະນຸຍາດ, ຢັ້ງຢືນ ນຳເຂົ້າ-ສົ່ງອອກ ແລະ ການເຄື່ອນຍ້າຍ ສິນຄ້າ ແມ່ນກຳນົດໃນລະບຽບການຂອງແຕ່ລະຂະແໜງການ ຕ່າງຫາກ.